# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ.........................................**ໜ້າ 01 – 10**

**II.** ການເຄື່ອນໄຫວຂອງການນຳພັກ ປະຊາຊົນ ປະຕິວັດລາວ...............................**ໜ້າ 11 – 14**

**III.** ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ.........**ໜ້າ 14- 16**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ກັນຍາ 2021**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Fax 021 414043, Email :Ri.dept.la@Gmail.com, Website :www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຢູ່ ສປປ ລາວ

ປະຊາຊົນລາວທົ່ວປະເທດ ສືບຕໍ່ປະຕິບັດຄໍາສັ່ງ, ສະບັບເລກທີ 15/ນຍ, ລົງວັນທີ 21/04/2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19. ໃນເດືອນ ກັນຍາ 2021 ການລະບາດ ຂອງພະຍາດດັ່ງກ່າວໄດ້ເພີ່ມຂຶ້ນຢ່າງໄວວາຢູ່ບັນດາແຂວງ ທີ່ມີປະຊາກອນໜາແໜ້ນໃນພາກກາງ ແລະ ພາກໃຕ້ ໂດຍສະເພາະ ແມ່ນນະຄອນຫຼວງວຽງຈັນ, ຫຼວງພະບາງ, ສະຫວັນນະເຂດ...ຮອດວັນທີ 30 ກັນຍາ 2021, ທົ່ວປະເທດ ມີຜູ້ຕິດເຊື້ອສະສົມ 23,846, ເພີ່ມຂຶ້ນ 8,831 ຄົນ; ປິ່ນປົວຫາຍດີ 18,047 ຄົນເພີ່ມຂຶ້ນ 8,029; ກໍາລັງປິ່ນປົວຢູ່ໂຮງໝໍ 5,441 ຄົນ, ເສຍຊີວິດສະສົມທັງໝົດ 19 ຄົນ; ປະຊາຊົນລາວ ທີ່ໄດ້ສັກວັກແຊງຄົບ 2 ເຂັມ 2,053,441 ຄົນ, ໄດ້ສັກເຂັມທີ່ໜຶ່ງ 2,946,298 ຄົນ. ພ້ອມກັນນັ້ນ, ລັດຖະບານສົມທົບກັບຂະແໜງສາທາລະນະສຸກ ຈະເລັ່ງສຸມໃສ່ການສັກວັກແຊງປ້ອງກັນ COVID-19 ໃຫ້ປະຊາຊົນທົ່ວປະເທດໃຫ້ໄດ້ 50% ໃນທ້າຍປີ 2021.

ບົດບາດ ສປປ ລາວ ໃນເວທີສາກົນ, ພາຍຫຼັງ ສປປ ລາວ ໄດ້ຮັບການເລືອກຕັ້ງໃຫ້ເປັນຮອງປະທານສະມັດຊາໃຫຍ່ສະຫະປະຊາຊາດ ສະໄໝທີ 76 ໃນເດືອນ ມິຖຸນາ 2021 ຜ່ານມາ; ໃນວັນທີ 22 ກັນຍາ 2021, ທ່ານອານຸພາບ ວົງໜໍ່ແກ້ວ, ເອກອັກຄະລັດຖະທູດ, ຜູ້ຕາງໜ້າຖາວອນ ແຫ່ງ ສປປ ລາວ ໄດ້ເປັນປະທານກອງປະຊຸມ ໃນພາກສຸດທ້າຍ ຂອງກອງປະຊຸມລະດັບສູງ ພາຍໃຕ້ສະມັດຊາໃຫຍ່ ເພື່ອສະເຫຼີມສະຫຼອງວັນຄົບຮອບ 20 ປີ ແຫ່ງການຮັບຮອງຖະແຫຼງການ ແລະ ແຜນປະຕິບັດງານເດີບັນ (Durban Declaration and Programme of Action) ວ່າດ້ວຍການຕ້ານການຈໍາແນກເຊື້ອຊາດ, ຜິວພັນ, ການລັງກຽດ ແລະ ການບໍ່ຍອມຮັບໃນຄວາມແຕກຕ່າງ; ແລະ ນໍາພາກອງປະຊຸມຄົບຄະນະຄັ້ງທີ 6 (6th Plenary meeting) ໂດຍຜ່ານວິດີໂອທາງໄກ, ເຊິ່ງມີບັນດາປະມຸກລັດ ຂອງ 13 ປະເທດເຂົ້າຮ່ວມ ແລະ ຜັດປ່ຽນກັນປະກອບຄໍາເຫັນແລກປ່ຽນກ່ຽວກັບສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນເປັນຕົ້ນແມ່ນມາດຕະການເພື່ອຮັບມືກັບການລະບາດຂອງໂຄວິດ-19 ແລະ ແກ້ໄຂຜົນກະທົບໄລຍະສັ້ນ ແລະ ໄລຍະຍາວ, ການກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ, ບັນຫາຄວາມບໍ່ສະຫງົບ ແລະ ການຕ້ານການກໍ່ການຮ້າຍ, ການສົ່ງເສີມຂອບການຮ່ວມມືຫຼາຍຝ່າຍ, ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ພາຍໃນປີ 2030.

## 2. ສະພາບການພາກພື້ນ ແລະ ສາກົນ

### 1) ສະພາບການລະບາດຂອງເຊື້ອພະຍາດ ໂຄວິດ - 19 ໃນທົ່ວໂລກ

ຫຼາຍປະເທດທົ່ວໂລກ ຍັງສືບຕໍ່ປະເຊີນກັບການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງປະເທດທີ່ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ຍັງແມ່ນ ອາເມລິກາ, ອິນເດຍ ແລະ ບຣາຊິນ. ຮອດວັນທີ 30 ກັນຍາ 2021, ຜູ້ຕິດເຊື້ອທົ່ວໂລກທັງໝົດ 233,949,885 ຄົນ, ເພີ່ມຂຶ້ນ 16,173,076 ຄົນ, ເສຍຊີວິດ 4,786,991 ຄົນ, ເພີ່ມຂຶ້ນ 265,012 ຄົນ, ປິ່ນປົວຫາຍດີທັງໝົດ 210,799,192 ຄົນ, ເພີ່ມຂຶ້ນ 16,115,694 ທຽບໃສ່ເດືອນຜ່ານມາ. ຂະນະດຽວກັນ, ຫຼາຍປະເທດ ຍັງສືບຕໍ່ເລັ່ງໃຫ້ປະຊາຊົນພາຍໃນປະເທດຂອງຕົນ ສັກວັກແຊງ ເພື່ອປ້ອງກັນການຕິດເຊື້ອພະຍາດດັ່ງກ່າວ ເຊັ່ນ: ຝຣັ່ງ ໄດ້ສັກວັກແຊງ ໃຫ້ພົນລະເມືອງຂອງຕົນແລ້ວ 70%, ເຢຍລະມັນ 64,3%, ອາເມລິກາ ຫຼາຍກວ່າ 60% ແລະ ຕັ້ງເປົ້າໝາຍໃຫ້ສັກໄດ້ 70% ໃນທ້າຍປີ 2021, ອິດສະລາແອນ ຫຼາຍກວ່າ 61%, ອັງກິດ ຫຼາຍກວ່າ 65%, ສິງກະໂປ ຫຼາຍກວ່າ 80%, ສ.ເກົາຫຼີ ກວມ 48%, ລັດເຊຍ 30%, ສ.ກູບາ ຈະໃຫ້ບັນລຸການສັກວັກແຊັງ ໃຫ້ໄດ້ 90 % ໃນກາງເດືອນພະຈິກ 2021.

### 2) ສະພາບການໃນຂົງເຂດອາຊີ-ປາຊີຟິກ

ເດືອນກັນຍາ 2021, ມີຫຼາຍເຫດການເກີດຂຶ້ນ ແລະ ເຄັ່ງຕຶງ ຢູ່ໃນຂົງເຂດອາຊີ-ປາຊີຟິກ ດັ່ງນີ້:

ວັນທີ 04/09/2021, ກອງປະຊຸມສະພາຜູ້ແທນປະຊາຊົນຂອງໄທ ໄດ້ລົງຄະແນນສຽງອະພິປາຍໄວ້ວາງໃຈໃຫ້ທ່ານ ປຣະຢຸດ ຈັນໂອຊາ, ນາຍົກລັດຖະມົນຕີ ພ້ອມດ້ວຍຄະນະລັດຖະບານ ສືບຕໍ່ບໍລິຫານປະເທດ ດ້ວຍຄະແນນສຽງ 264 ສຽງ, ເກີນ 50% ໃນຈໍານວນຜູ້ລົງຄະແນນທັງໝົດ 475 ທ່ານ ໃນສະພາ, ສ່ວນ ຜູ້ທີ່ລົງຄະແນນບໍ່ໄວ້

ວາງໃຈ ມີ 208 ສຽງ ໃນນັ້ນມີສະມາຊິກພັກພະລັງປະຊາລັດຈຳນວນໜຶ່ງ ລົງຄະແນນສຽງບໍ່ໄວ້ວາງໃຈ ທ່ານ ພົນເອກ ປຣະຍຸດ ຈັນໂອຊາ. ຂະນະດຽວກັນ, ປະຊາຊົນຫຼາຍຮ້ອຍຄົນ ໄດ້ອອກມາສືບຕໍ່ເດີນຂະບວນປະທ້ວງຕາມຖະໜົນ ເພື່ອຂັບໄລ່ ທ່ານ ປຣະຢຸດ ຈັນໂອຊາ ອອກຈາກຕຳແໜ່ງນາຍົກລັດຖະມົນຕີ ທ່າມກາງການແຜ່ລະບາດຂອງເຊື້ອພະຍາດໂຄວິດ - 19 ໃນປະເທດ.

ວັນທີ 05/09/2021, ທ່ານ Erywan Yusof, ລັດຖະມົນຕີຕ່າງປະເທດບູຣໄນ, ທູດພິເສດອາຊຽນປະຈຳມຽນມາ ແລະ ທ່ານ Wunna Maung Lwin, ລັດຖະມົນຕີຕ່າງປະເທດມຽນມາ ໄດ້ປຶກສາຫາລືກ່ຽວກັບບັນຫາພາຍໃນມຽນມາ. ທ່ານ Erywan Yusof, ໄດ້ສະເໜີໃຫ້ມີການຢຸດຍິງລະຫວ່າງ ລັດຖະບານທະຫານມຽນມາ ກັບບັນດາຝ່າຍຕ່າງໆທີ່ຕໍ່ຕ້ານ ເພື່ອປົກປ້ອງສິດທິມະນຸດຂອງປະຊາຊົນໃນມຽນມາ, ລັດຖະບານທະຫານມຽນມາ ແລະ ຝ່າຍຕໍ່ຕ້ານກໍ່ເຫັນດີຕາມການສະເໜີດັ່ງກ່າວ. ທູດອາຊຽນ ຍັງໄດ້ແລກປ່ຽນ ແລະ ສະເໜີກ່ຽວກັບການລົງຢ້ຽມຢາມພື້ນທີ່ຕ່າງໆໃນມຽນມາ, ເຂົ້າພົບກັບ ທ່ານ ນາງ ອອງຊານ ຊູຈີ, ຜູ້ນຳພັກສັນນິບາດ ເພື່ອປະຊາທິປະໄຕ (NLD). ຂະນະດຽວກັນ, ໃນວັນທີ 07/09/2021, ທ່ານ Duwa LashiLa, ຕົວແທນລັດຖະບານເງົາ (NUG) ມຽນມາ ໄດ້ອອກມາປະກາດພາວະສຸກເສີນ ເພື່ອປຸກລະດົມ ປະຊາຊົນທົ່ວປະເທດ, ຊົນເຜົ່າກຸ່ມນ້ອຍ ແລະ ກຳລັງປ້ອງກັນຄວາມສະຫງົບທີ່ຕໍ່ຕ້ານລັດຖະບານທະຫານ ອອກມາ ຕໍ່ສູ້ຕ້ານການປົກຄອງຂອງທະຫານ ເພື່ອສິດທິເສລີພາບ ແລະ ສົ່ງເສີມປະຊາທິປະໄຕໃນມຽນມາ.

ວັນທີ 3/9/2021, ທ່ານ ຊູກະ ໂຢຊິຮິເດະ (Suga Yoshihide), ນາຍົກລັດຖະມົນຕີ ຍີ່ປຸ່ນ ໄດ້ຖະແຫຼງ ຈະບໍ່ລົງສະໝັກເລືອກຕັ້ງເປັນປະທານພັກເສລີປະຊາທິປະໄຕ (LDP) ສະໄໝຕໍ່ໄປ, ເຊິ່ງການເລືອກຕັ້ງຜູ້ນຳພັກຄົນໃໝ່ໄດ້ຈັດຂຶ້ນໃນວັນທີ 29/09/2021, ໂດຍແມ່ນທ່ານ Fumio Kishida, ອະດີດລັດຖະມົນຕີຕ່າງປະເທດ, ອະດີດປະທານສະພາຄົ້ນຄວ້ານະໂຍບາຍຂອງພັກ LDP ຊະນະ ເປັນປະທານພັກເສລີປະຊາທິປະໄຕ (LDP) ດ້ວຍຄະແນນ 257 ສຽງ, ສ່ວນທ່ານ Taro Kono, ລັດຖະມົນຕີຮັບຜິດຊອບວຽກງານວັກແຊງຕ້ານພະຍາດໂຄວິດ - 19 ໄດ້ 170 ສຽງ ແລະ ໃນວັນທີ 04/10/2021, ສະມາຊິກສະພາ ຂອງຍີ່ປຸ່ນ (National Diet) ໄດ້ລົງຄະແນນສຽງຮັບຮອງ ທ່ານ Fumio Kishida ເປັນນາຍົກລັດຖະມົນຕີຄົນໃໝ່ ແທນ ທ່ານ ຊູກະ ໂຍຊິຮິເດະ. ໃນເບື້ອງຕົ້ນ, ທ່ານ Fumio Kishida ໄດ້ປະກາດນະໂຍບາຍແກ້ໄຂບັນຫາເສດຖະກິດ, ຄວາມໝັ້ນຄົງ, ປົກປ້ອງປະຊາທິປະໄຕ, ເພີ່ມທະວີວຽກງານການທູດ, ຈະສຸມໃສ່ການແກ້ໄຂບັນຫາການແຜ່ລະບາດຂອງເຊື້ອພະຍາດໂຄວິດ - 19 ແລະ ຈະເພີ່ມງົບປະມານ 90 ຕື້ໂດລາສະຫະລັດ ເຂົ້າໃນການພັດທະນາວຽກງານໃນຂົງເຂດວິທະຍາສາດ ແລະ ເຕັກໂນໂລຊີ.

ວັນທີ 12/09/2021, ທ່ານ Kishi Nobuo, ລັດຖະມົນຕີປ້ອງກັນປະເທດຍີ່ປຸ່ນ ໄດ້ຢ້ຽມຢາມ ສສ ຫວຽດນາມ, ພົບປະກັບ ທ່ານ Phan Văn Giang, ລັດຖະມົນຕີປ້ອງກັນປະເທດຫວຽດນາມ. ສອງຝ່າຍ ໄດ້ທົບທວນການຮ່ວມມືໃນຂົງເຂດການທະຫານ, ແລກປ່ຽນບັນຫາພາກພື້ນ ແລະ ສາກົນ ລວມທັງຄວາມສຳຄັນຂອງເສລີພາບໃນການເດີນເຮືອ ແລະ ບິນຜ່ານ ໃນພາກພື້ນ ໂດຍສະເພາະແມ່ນ ຄວາມຈຳເປັນໃນການນຳໃຊ້ກົດໝາຍສາກົນ, ສົນທິສັນຍາ ສປຊ ວ່າດ້ວຍກົດໝາຍທາງທະເລ ປີ 1982 ຫຼື UNCLOS, ແລກປ່ຽນປະສົບການວຽກງານປ້ອງກັນພະຍາດໂຄວິດ - 19 ແລະ ລົງນາມໃນຂໍ້ຕົກລົງມອບອຸປະກອນ ແລະ ເຕັກໂນໂລຊີ ຮັບໃຊ້ໃນກອງທັບ; ຢືນຢັນຈະຮ່ວມກັນຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນເພື່ອນມິດຍຸດທະສາດ ລະຫວ່າງສອງປະເທດ.

ວັນທີ 11 - 14/09/2021, ທ່ານ ຫວັງອີ້, ທີ່ປຶກສາແຫ່ງລັດ, ລັດຖະມົນຕີຕ່າງປະເທດຈີນ ຢ້ຽມຢາມ ສສ ຫວຽດນາມ, ກຳປູເຈຍ, ສິງກະໂປ ຕາມລຳດັບ. ການຢ້ຽມຢາມ ສສ ຫວຽດນາມ, ໄດ້ເຂົ້າຢ້ຽມຂຳນັບ ສະຫາຍ ຫງວຽນ ຟູ ຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ; ສະຫາຍ ຟາມ ມິ່ງຈິງ, ນາຍົກ ລັດຖະມົນຕີ ແລະ ພົບປະກັບຄູ່ຮ່ວມຕຳແໜ່ງ ສະຫາຍ ບຸ່ຍ ແທັງເຊີ່ນ. ສອງຝ່າຍ ໄດ້ຕີລາຄາສູງຕໍ່ສາຍພົວພັນຮ່ວມມືຂອງສອງປະເທດທີ່ໄດ້ຮັບການພັດທະນາເປັນກ້າວໆມາ, ການແລກປ່ຽນການຢ້ຽມຢາມຂອງການນຳຂັ້ນສູງຂອງສອງພັກ - ລັດ ໄດ້ເພີ່ມຂຶ້ນ; ເຫັນດີເພີ່ມທະວີການຮ່ວມມືດ້ານການເມືອງ, ການຮ່ວມມືຮອບດ້ານ ບົນພື້ນຖານນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງຊາດ, ສົ່ງເສີມການຮ່ວມມືຫຼາຍຝ່າຍ ແລະ ສືບຕໍ່ຮ່ວມມືກ່ຽວກັບວຽກງານຕ້ານການແຜ່ລະບາດເຊື້ອພະຍາດໂຄວິດ - 19; ສືບຕໍ່ປະຕິບັດຕາມຜົນການພົບປະຂອງການນຳຂັ້ນສູງຂອງສອງປະເທດຢ່າງເຂັ້ມງວດ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງໃນທະເລຕາເວັນອອກ ຫຼື ທະເລຈີນໃຕ້ ເພື່ອສະຖຽນລະພາບ ແລະ ຄວາມໝັ້ນ

ຄົງໃນຂົງເຂດດັ່ງກ່າວ, ພ້ອມທັງຮ່ວມມືກັບບັນດາປະເທດສະມາຊິກອາຊຽນ ເພື່ອຮ່ວມກັນສ້າງກົດແຫ່ງການປະພຶດ COC ໃຫ້ມີປະສິດທິພາບ ແລະ ສຳເລັດໂດຍໄວ ຕາມກົດໝາຍສາກົນ, ສົນທິສັນຍາ ສປຊ ວ່າດ້ວຍກົດໝາຍທາງທະເລ ປີ 1982 ຫຼື UNCLOS. ສ່ວນການຢ້ຽມຢາມ ກຳປູເຈຍ, ທ່ານ ຫວັງອີ້ ໄດ້ເຂົ້າຢ້ຽມຂ່ຳນັບ ທ່ານ ສົມເດັດ ຮຸນ ເຊັນ, ນາຍົກລັດຖະມົນຕີກຳປູເຈຍ ແລະ ພົບປະກັບທ່ານ ປຣະ ສົກຄົນ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີຕ່າງປະເທດ, ໄດ້ປຶກສາຫາລືກ່ຽວກັບການຮ່ວມມືສອງຝ່າຍໃນຫຼາຍຂົງເຂດເຊັ່ນ: ວຽກງານຕ້ານໂຄວິດ - 19, ການຄ້າ, ການລົງທຶນ, ການສຶກສາ,  ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ບັນຫາພາກພື້ນ ແລະ ສາກົນ. ທ່ານ ຫວັງອີ້ ໄດ້ຮ່ວມພິທີມອບ - ຮັບ ໂຄງການກໍ່ສ້າງສະໜາມກິລາແຫ່ງຊາດ ໂດຍການຊ່ວຍເຫຼືອຈາກລັດຖະບານຈີນ ເພື່ອຮັບໃຊ້ໃນງານມະຫາກຳກິລາຊີເກມ ທີ່ກຳປູເຈຍ ຈະເປັນເຈົ້າພາບ ໃນປີ 2023; ສອງຝ່າຍຍັງໄດ້ລົງນາມເອກະສານຮ່ວມມືຈຳນວນ 6 ສະບັບ ເປັນຕົ້ນແມ່ນ ສປ ຈີນຈະຊ່ວຍເຫຼືອ 270 ລ້ານໂດລາສະຫະລັດ, ຊ່ວຍຢາວັກແຊງຕ້ານເຊື້ອພະຍາດໂຄວິດ - 19 ຈຳນວນ 3 ລ້ານໂດສ ແລະ ເພີ່ມການນຳເຂົ້າສິນຄ້າກະສິກຳຈາກກາປູເຈຍ. ການຢ້ຽມຢາມສິງກະໂປ, ທ່ານ ຫວັງອີ້ ໄດ້ເຂົ້າຢ້ຽມຂ່ຳນັບ ທ່ານ ລີຊຽນຫຼົງ, ນາຍົກລັດຖະມົນຕີ ແລະ ພົບປະກັບຄູ່ຮ່ວມຕຳແໜ່ງ ທ່ານ Dr. Vivain BalaKrishnan, ໄດ້ປຶກສາຫາລືກ່ຽວກັບການພັດທະນາໃນພາກພື້ນ ແລະ ສາກົນ, ກະກຽມສະເຫຼີມສະຫຼອງຄົບຮອບ 30 ປີ ການເປັນຄູ່ເຈລະຈາ ອາຊຽນ - ຈີນ; ເຫັນດີເພີ່ມທະວີການຮ່ວມມືຕ້ານການແຜ່ລະບາດຂອງພະຍາດໂຄວິດ - 19, ການພັດທະນາເສດຖະກິດດີຈີຕອນການຄ້າ, ການລົງທຶນ, ການພັດທະນາບັນດາພື້ນຖານໂຄງລ່າງ, ການເຊື່ອມຈອດ ແລະ ການພັດທະນາທີ່ເປັນມິດກັບສິ່ງແວດລ້ອມ. ສິງກະໂປ ເຫັນດີສະໜັບສະໜູນການເລັ່ງເຈລະຈາສ້າງກົດແຫ່ງການປະພຶດ COC ໃນທະເລຈີນໃຕ້ ແລະ ຂໍ້ຕົກລົງ RCEP.

ວັນທີ 15/09/2021, ທ່ານ ຫວັງອີ້ ໄດ້ຢ້ຽມຢາມ ສ. ເກົາຫຼີ, ເຂົ້າຢ້ຽມຂ່ຳນັບ ທ່ານ ມູແຈອິນ, ປະທານາທິບໍດີ ແລະ ພົບປະກັບ ທ່ານ Chung Eui – Yong, ລັດຖະມົນຕີຕ່າງປະເທດ ແລະ ທ່ານ Lim Chae-jung, ປະທານຮ່ວມຄະນະພັດທະນາອະນາຄົດສາຍພົວພັນ ສ.ເກົາຫຼີ-ຈີນ. ສອງຝ່າຍ ຕີລາຄາການຮ່ວມມືໃນໄລຍະຜ່ານມາ ໄດ້ຂະຫຍາຍຕົວຢ່າງຕັ້ງໜ້າ ເປັນຕົ້ນແມ່ນການແລກປ່ຽນບົດຮຽນ ໃນການປ້ອງກັນ ຄວບຄຸມພະຍາດໂຄວິດ - 19, ແລກປ່ຽນການຢ້ຽມຢາມ ຂອງຄະນະຜູ້ແທນຂັ້ນຕ່າງໆ, ການຮ່ວມມືທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ; ສອງຝ່າຍມີມູນຄ່າການຄ້າຮ່ວມກັນເຖິງ 300 ຕື້ໂດລາສະຫະລັດ, ການລົງທຶນ 100 ຕື້ໂດລາສະຫະລັດ ຕະຫຼອດໄລຍະຜ່ານມາ.

ວັນທີ 14/09/2021, ມີການພົບປະສອງຝ່າຍ ລະຫວ່າງສອງລັດຖະມົນຕີປ້ອງກັນປະເທດ ແລະ ລັດຖະມົນຕີຕ່າງປະເທດ ຂອງ ສ.ເກົາຫຼີ ແລະ ອົດສະຕຣາລີ; ພ້ອມນັ້ນ ມີການພົບປະສາມຝ່າຍ, ສ.ເກົາຫຼີ, ອາເມລິການ ແລະ ຍີ່ປຸ່ນ ທີ່ປະເທດ ຍີ່ປຸ່ນ, ເຊິ່ງທັງໝົດການພົບປະດັ່ງກ່າວ ເວົ້າລວມແມ່ນ ປຶກສາຫາລືແກ້ໄຂບັນຫາແຫຼມເກົາຫຼີ, ເນັ້ນໃສ່ບັນຫາອາວຸດສິງຄາມ ຂອງ ສປປ ເກົາຫຼີ, ຮຽກຮ້ອງໃຫ້ ສປປ ເກົາຫຼີ ກັບຄືນສູ່ໂຕະເຈລະຈາ ເພື່ອແກ້ໄຂບັນຫາດັ່ງກ່າວ. ຫຼັງຈາກນັ້ນ, ເພື່ອປ້ອງກັນຕົວ, ຕອບໂຕ້ ອາເມລິກາ ແລະ ພັນທະມິດ ຂອງ ອາເມລິກາ, ໃນວັນທີ 15/09/2021, ສປປ ເກົາຫຼີ ໄດ້ທົດລອງລູກສອນໄຟ 05 ລູກ, ໃນນັ້ນ, 02 ລູກ ສາມາດໂຈມຕີເປົ້າໝາຍໃນໄລຍະ 1500 ກິໂລແມັດ ແລະ ລູກສອນໄຟພິໄສໃກ້ (SLBM) ສາມາດຍິງໄດ້ໄກເຖິງ 800 ກິໂລແມັດ ດ້ວຍຄວາມສູງ 60 ກິໂລແມັດ, ໂດຍໃຊ້ລົດໄຟເປັນຖານຍິງ ຢູ່ເມືອງ Yangdok ໄປສູ່ທະເລຕາເວັນອອກ ຂອງປະເທດ, ເປັນການສ້າງຄວາມເຊື່ອໝັ້ນໃຫ້ແກ່ກອງທັບ ສປປ ເກົາຫຼີ ແລະ ທັງເປັນການສະເຫຼີມສະຫຼອງວັນສ້າງຕັ້ງ ສປປ ເກົາຫຼີ ຄົບຮອບ 73 ປີ; ແລະ ໃນວັນທີ 28/09/2021, ສປປ ເກົາຫຼີ ໄດ້ທົດລອງລູກສອນໄຟ hypersonic Hwasong – 8 ຈຳນວນ 01 ລູກ ຈາກຖານຍິງທີ່ແຂວງ Jagang ຈາກແຄມຝັ່ງທະເລ ໄປທາງທິດຕາເວັນອອກ ເບື້ອງປະເທດຍີ່ປຸ່ນ ແລະ ເປັນການທົດລອງຄັ້ງທຳອິດຂອງລູກສອນໄຟພະລັງງານເຊື້ອໄຟທີ່ພັດທະນາຂຶ້ນໃໝ່, ເຊິ່ງເປັນໂຄງການໜຶ່ງໃນຫ້າ ຂອງ ແຜນບູລິມະສິດການພັດທະນາອາວຸດຂອງແຜນພັດທະນາຍຸດທະສາດ 05 ປີ ສະໄໝທີ 8 ຂອງພັກແຮງງານເກົາຫຼີ.

ວັນທີ 16 ກັນຍາ 2021, ທ່ານ wang wentao, ລັດຖະມົນຕີການຄ້າ ສປ ຈີນ ໄດ້ຍື່ນໜັງສືສະໝັກເຂົ້າຮ່ວມກຸ່ມ ຂໍ້ຕົກລົງການຄ້າເສລີ ຮອບດ້ານ ແລະ ກ້າວໜ້າຂອງຄູ່ຮ່ວມມືຂ້າມພາກພື້ນປາຊີຟິກ ຫຼື CPTPP (Comprehensive and Progressive Agreement for Trans-Pacific Partnership) ຢ່າງເປັນທາງການ ເຖິງທ່ານ Growth Damien O’Cornor, ລັດຖະມົນຕີການຄ້າ ແລະ ສົ່ງອອກ ຂອງ ນູແວນເຊລັງ ໃນຖານະເປັນຜູ້

ບໍລິຫານຂອງ ກຸ່ມ CPTPP ແຕ່ຈະຕ້ອງຜ່ານການຮັບຮອງຈາກ 11 ປະເທດສະມາຊິກ (ອົດສະຕຣາລີ, ການາດາ, ຈີເລ ແມັກຊິກ, ນູແອນເຊລັງ, ເປຣູ, ຍີ່ປຸ່ນ, ສິງກະໂປ, ຫວຽດນາມ, ບຣູໄນ ແລະ ມາເລເຊຍ). ຂໍ້ຕົກລົງ CPTPP ເປັນຂໍ້ຕົກລົງການຄ້າເສລີ, ທີ່ມີມາດຕະຖານສູງ, ຫຼຸດຜ່ອນກຳແພງພາສີສິນຄ້າ, ການບໍລິການ ແລະ ການລົງທຶນ ເຖິງ 95% ແລະ ເປັນຂໍ້ຕົກລົງການຄ້າທີ່ມີຂະໜາດໃຫຍ່ ເຊິ່ງກວມເອົາປະຊາກອນ 500 ລ້ານຄົນ ແລະ ກວມ 13,5 % ຂອງ GDP ໂລກ, ຫາກວ່າ ສປຈີນ ໄດ້ເຂົ້າເປັນສະມາຊິກຂອງກຸ່ມດັ່ງກ່າວຈະເຮັດໃຫ້ກວມເອົາ GDP ໂລກເຖິງ 28%. ສ່ວນ ອັງກິດ ໄດ້ສະໝັກເຂົ້າກຸ່ມ CPTPP ໃນເດືອນ 01/2021 ແຕ່ຍັງຢູ່ໃນຂັ້ນຕອນການເຈລະຈາກັບບັນດາປະເທດສະມາຊິກ ແລະ ຄາດວ່າຈະໃຫ້ສຳເລັດ ໃນທ້າຍປີ 2022. ນອກຈາກນັ້ນ, ຍັງມີ ໄທ, ອິນໂດເນເຊຍ, ຟີລິບປິນ, ສ.ເກົາຫຼີ ແລະ ໄຕ້ຫວັນ ເຂດປົກຄອງຂອງ ສປ ຈີນ ກໍສົນໃຈຈະເຂົ້າຮ່ວມກຸ່ມດັ່ງກ່າວເຊັ່ນດຽວກັນ.

ວັນທີ 24/09/2021, ຜູ້ນຳ ຂອງ ກຸ່ມ Quad (ທ່ານ ໂຈ ໄບເດິນ, ປະທານາທິບໍດີ ອາເມລິກາ, ທ່ານ ສະກອດ ມໍຣິຊັນ, ນາຍົກລັດຖະມົນຕີ ອົດສະຕຣາລີ, ທ່ານ ນາເຣັນດຣາ ໂມດີ, ນາຍົກລັດຖະມົນຕີ ອິນເດຍ ແລະ ທ່ານ ຊູກະ ໂຍຊິຮິເດະ, ນາຍົກລັດຖະມົນຕີ ຍີ່ປຸ່ນ) ໄດ້ມີການພົບປະກັນ ທີ່ ນະຄອນຫຼວງວໍຊິງຕັນ, ສະຫະລັດອາເມລິກາ ເພື່ອປຶກສາຫາລືກ່ຽວກັບການຮ່ວມມືໃນພາກພື້ນ ໂດຍເນັ້ນໃສ່ ຍຸດທະສາດອິນໂດ - ປາຊີຟິກ (the Indo-Pacific strategy) ປິດລ້ອມການຂະຫຍາຍຕົວ ແລະ ດຸນດ່ຽງບົດບາດຂອງ ສປ ຈີນ ໃນພາກພື້ນດັ່ງກ່າວ. ພ້ອມກັນນັ້ນ, ຜູ້ນຳ 04 ປະເທດ ຍັງໄດ້ແລກປ່ຽນກ່ຽວກັບການສ້າງພື້ນຖານໂຄງລ່າງ, ການພັດທະນາວຽກງານອາວະກາດ, ພະລັງງານສີຂຽວ, ພັດທະນາຊັບພະຍາກອນມະນຸດ, ຮ່ວມມືກັນຕ້ານການແຜ່ລະບາດຂອງເຊື້ອພະຍາດໂຄວິດ - 19, ບັນຫາໃນແຫຼມເກົາຫຼີ ແລະ ຕົກລົງໃຫ້ມີການພົບປະຮ່ວມກັນເປັນປະຈຳ ໃນລະດັບຂັ້ນຜູ້ນຳ ແລະ ລັດຖະມົນຕີ ຂອງກຸ່ມເປັນປົກກະຕິ.

**3) ສະພາບການ ໃນຂົງເຂດເອີລົບ-ອາເມລິກາ**

ວັນທີ 20 ກັນຍາ 2021, ລັດເຊຍ ໄດ້ດຳເນີນການເລືອກຕັ້ງສະມາຊິກສະພາດູມາ ຈຳນວນ 450 ທີ່ນັ່ງທົ່ວປະເທດ, ມີປະຊາຊົນຫຼາຍກວ່າ 110 ລ້ານຄົນ ເທົ່າກັບ 51.68% ໄດ້ໄປໃຊ້ສິດເລືອກຕັ້ງ. ຜົນການເລືອກຕັ້ງ: ພັກລັດເຊຍເອກະພາບ (The United Russia) ໄດ້ຮັບໄຊຊະນະດ້ວຍຄະແນນສຽງ 324 ບ່ອນນັ່ງ; ພັກກອມມູນິດສະຫະພັນລັດເຊຍ (The Communist Party of Russia Federation) ໄດ້ 57 ບ່ອນນັ່ງ; ພັກເສລີປະຊາທິປະໄຕ (The Liberal Democratic Party) ໄດ້ 21 ບ່ອນນັ່ງ; ພັກ A Just Russia - Patriots - For Truth ໄດ້ 27 ບ່ອນນັ່ງ; ພັກ the New People Party (ສ້າງຕັ້ງຂຶ້ນໃນທ້າຍປີ 2020) ໄດ້ 13 ບ່ອນນັ່ງ ແລະ ຜູ້ສະໝັກເອກະລາດຈຳນວນ 05 ທ່ານ ປະຈຳ 05 ເຂດເລືອກຕັ້ງ ໄດ້ຮັບການເລືອກຕັ້ງເຂົ້າສະພາດູມາ ຄັ້ງທີ 08.

ວັນທີ 26 ກັນຍາ 2021, ເຢຍລະມັນ ໄດ້ດຳເນີນການເລືອກຕັ້ງສະມາຊິກສະພາທົ່ວປະເທດ ຈຳນວນທັງໝົດ 735 ບ່ອນນັ່ງ. ຜົນການເລືອກຕັ້ງ: ພັກສັງຄົມປະຊາທິປະໄຕ (SPD) ນຳໂດຍ ທ່ານ Olaf Scholz, ຊະນະ ດ້ວຍຄະແນນສຽງ 25,8%, ພັກສະຫະພັນປະຊາທິປະໄຕຄຣິສຕຽນ (CDU) ນຳໂດຍ ທ່ານ ນາງ Angela Merkel ໄດ້ 24,2 %, ພັກ Green ໄດ້ 14,8%, ພັກ FDP ( Free Democratic Party) ໄດ້ 11,8%, ພັກ The Right – wing AFD ໄດ້ 10,1%, ພັກ Dielinke (the Left) ໄດ້ 5%. ທ່ານ Olaf Scholz ຜູ້ນຳພັກ SPD, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ປະກາດວ່າ ຈະຈັດຕັ້ງລັດຖະບານປະສົມກັບພັກ Green ທີ່ນຳໂດຍ ທ່ານ ນາງ Annalena Baerbock ແລະ ພັກ FDP ທີ່ນຳໂດຍ ທ່ານ Christian Lindner.

ວັນທີ 15/09/2021, ທີ່ນະຄອນຫຼວງວໍຊິງຕັນ, ທ່ານ ໂຈ ໄບເດິນ, ປະທານາທິບໍດີ ອາເມລິກາ, ທ່ານ ບໍຣິສ ຈອນຊັນ, ນາຍົກລັດຖະມົນຕີອັງກິດ ແລະ ທ່ານ ສະກອດ ມໍຣິຊັນ, ນາຍົກລັດຖະມົນຕີ ອົດສະຕຣາລີ ໄດ້ຖະແຫຼງຮ່ວມກັນຜ່ານວີດີໂອທາງໄກ ກ່ຽວກັບການສ້າງສົນທິສັນຍາດ້ານຄວາມໝັ້ນຄົງ 3 ຝ່າຍ ລະຫວ່າງ ອາເມລິກາ, ອັງກິດ ແລະ ອົດສະຕຣາລີ ຫຼືເອີ້ນວ່າ ສົນທິສັນຍາ AUKUS ວ່າດ້ວຍການຮ່ວມມືແລກປ່ຽນຂໍ້ມູນຂ່າວສານ, ຮ່ວມມືດ້ານເຕັກໂນໂລຊີ ເປັນຕົ້ນ ປັນຍາປະດິດ, Quantum, ການຜະລິດລູກສອນໄຟນຳວິຖີ, ຄວາມໝັ້ນຄົງທາງໄຊເບີ, ລະບົບ AI, ແລະ ອື່ນໆ. ໃນນັ້ນ, ອາເມລິກາ ແລະ ອັງກິດ ຈະຊ່ວຍເຫຼືອອົດສະຕຣາລີ ໃນດ້ານເຕັກໂນໂລຊີການສ້າງເຮືອດຳນ້ຳພະລັງງານນິວເຄຼຍ ແລະ ອະນຸຍາດໃຫ້ອົດສະຕຣາລີ ສາມາດນຳໃຊ້ເຮືອດຳນ້ຳດັ່ງກ່າວ ລາດຕະເວນໃນຂົງເຂດອິນ

ໂດ-ປາຊີຟິກ. ສົນທິສັນຍາ AUSUS ຈະເຮັດໃຫ້ອົດສະຕຣາລີ ກາຍເປັນປະເທດທີ 7 ຂອງໂລກ ທີ່ຄອບຄອງເຮືອດຳນ້ຳພະລັງງານນິວເຄຼຍ ຕໍ່ຈາກ ອາເມລິກາ, ອັງກິດ, ຝຣັ່ງ, ຈີນ, ລັດເຊຍ ແລະ ອິນເດຍ.

ວັນທີ 22/09/2021, ທ່ານ ໂຈ ໄບເດິນ, ປະທານາທິບໍດີ ອາເມລິກາ, ໄດ້ສົນທະນາຜ່ານໂທລະສັບ ກັບ ທ່ານ ເອັມມານູແອນ ມາກົງ, ປະທານາທິບໍດີ ຝຣັ່ງ ເພື່ອຊີ້ແຈງກ່ຽວກັບການຕັດສິນໃຈລົງນາມໃນສົນທິສັນຍາຄວາມໝັ້ນຄົງສາມຝ່າຍ AUKUS ທີ່ປະກອບມີ ອາເມລິກາ, ອົດສະຕຣາລີ ແລະ ອັງກິດ. ສອງຝ່າຍໄດ້ຕົກລົງຈະປຶກສາຫາລືບັນຫາດັ່ງກ່າວ ຮ່ວມກັບບັນດາພັນທະມິດໃນສະຫະພາບເອີລົບ ໃນທ້າຍເດືອນ 10/2021 ແລະ ຝຣັ່ງ ຈະສົ່ງທູດຕົນເອງກັບໄປປະຈຳນະຄອນຫຼວງວໍຊິງຕັນ ພາຍຫຼັງທີ່ ໄດ້ຮຽກກັບຄືນປະເທດ ຕໍ່ຄວາມບໍ່ພໍໃຈໃນການຕັດສິນໃຈຍົກເລີກສັນຍາຊື້ເຮືອດຳນ້ຳຈາກຝຣັ່ງ ຂອງອົດສະຕຣາລີ ທີ່ມີມູນຄ່າ 40 ຕື້ໂດລາສະຫະລັດ ໃນປີ 2016 ແລະ ຫັນມາຜະລິດເຮືອດຳນ້ຳພະລັງງານນິວເຄຼຍເອງ ທີ່ໄດ້ຮັບການສະໜັບສະໜູນທາງດ້ານເຕັກນິກ ຈາກ ສ. ອາເມລິກາ ແລະ ອັງກິດ.

**4) ສະພາບການໃນຂົງເຂດຕາເວັນອອກກາງ**

ວັນທີ 07/09/2021, ກຸ່ມຕາລີບັນ ໄດ້ປະກາດວ່າ ປະເທດອາຟະການິດສະຖານ ເປັນຊາດອິດສະລາມ (Islamic Emirate) ມີ 19 ກະຊວງ, ຄະນະລັດຖະບານຊົ່ວຄາວ ປະກອບມີ ທ່ານ Hibatullah Akhundzada, ເປັນຜູ້ນຳສູງສຸດ; ທ່ານ Mullah Hasan Akhund, ເປັນຮັກສາການນາຍົກລັດຖະມົນຕີ; ທ່ານ Mullah Abdul Ghani Baradar ແລະ ທ່ານ Abdul Salam Hanafi, ເປັນຮັກສາການຮອງນາຍົກລັດຖະມົນຕີ; ທ່ານ Mullah Mohammad Yaqoob, ເປັນຮັກສາການລັດຖະມົນຕີກະຊວງປ້ອງກັນປະເທດ; ທ່ານ Amir Khan Muttaqi, ເປັນຮັກສາການລັດຖະມົນຕີການຕ່າງປະເທດ; ທ່ານ Sarajuddin Haqqani, ເປັນຮັກສາການລັດຖະມົນຕີກະຊວງພາຍໃນ; ທ່ານ Khalil Ur Rehman Haqqani, ເປັນຮັກສາການລັດຖະມົນຕີຊາວອົບພະຍົບ; ທ່ານ Mullah Hedayatullah Badri, ເປັນຮັກສາການລັດຖະມົນຕີກະຊວງການເງິນ; ທ່ານ Abdul Hakim, ເປັນຮັກສາການລັດຖະມົນຕີກະຊວງຍຸຕິທຳ; ທ່ານ Khairullah Khairkhwa, ເປັນຮັກສາການລັດຖະມົນຕີ ຂໍ້ມູນຂ່າວສານ; ທ່ານ Mullah Abdul Haq Wasiq, ເປັນຮັກສາການຫົວໜ້າຄວາມໝັ້ນຄົງແຫ່ງຊາດ; ທ່ານ Mullah Rahmatullah Najib, ເປັນຮັກສາການຮອງຫົວໜ້າຄວາມໝັ້ນຄົງແຫ່ງຊາດ; ທ່ານ Sheikh Mawlwai Noorullah Munir, ເປັນຮັກສາການລັດຖະມົນຕີກະຊວງສຶກສາ; ທ່ານ Abas Stanikzai, ເປັນຮອງລັດຖະມົນຕີຕ່າງປະເທດ; ທ່ານ Mawlawi Taj Mir Jawad, ຮອງຫົວໜ້າສືບຂ່າວລັບ. ພ້ອມກັນນັ້ນ, ທ່ານ Hibatullah Akhundzada, ຜູ້ນຳສູງສຸດຂອງລັດຖະບານຕາລີບັນ ໄດ້ຮຽກຮ້ອງໃຫ້ ບັນດາເຈົ້າໜ້າທີ່, ພະນັກງານ, ນັກການທູດ ແລະ ອົງການຈັດຕັ້ງສາກົນອື່ນໆ ທີ່ໄປລີ້ໄພຢູ່ຕ່າງປະເທດ ກັບຄືນປະເທດ, ພ້ອມທັງສັນຍາວ່າ ຈະຮັບປະກັນຄວາມໝັ້ນຄົງ ແລະ ຄວາມປອດໄພໃນຊີວິດຂອງພວກກ່ຽວ ແລະ ຮຽກຮ້ອງໃຫ້ປະຊາຊົນອາຟະການິດສະຖານ ຍຸດຕິການເດີນທາງອອກຈາກປະເທດ; ລັດຖະບານຕາລີບັນຕ້ອງການສ້າງສາຍສຳພັນອັນດີກັບບັນດາປະເທດໃນພາກພື້ນ ແລະ ສາກົນ, ເຊື່ອໝັ້ນວ່າ ປະຊາຊົນ ອາຟະການິດສະຖານຕ້ອງການໃຫ້ທຸກຢ່າງດຳເນີນໄປດ້ວຍດີ ເພື່ອສັນຕິພາບ ແລະ ນຳເອົາຄວາມຈະເລີນຮຸ່ງເຮືອງມາສູ່ປະຊາຊົນ ອາຟະການິດສະຖານ.

ສປ ຈີນ ແລະ ອຸດສະເບກິດສະຖານ ຈະຮ່ວມມື ແລະ ສະໜັບສະໜູນລັດຖະບານຕາລີບັນ, ເຊິ່ງ ສປ ຈີນ ຊ່ວຍເຫຼືອເບື້ອງຕົ້ນແກ່ ອາຟະການິດສະຖານ ມູນຄ່າ 200 ລ້ານຢວນ, ລວມທັງ ອາຫານ ແລະ ຢາວັກແຊງ 3 ລ້ານໂດສ. ຂະນະທີ່ ທ່ານ Antony Blinken, ລັດຖະມົນຕີຕ່າງປະເທດອາເມລິກາ ໄດ້ເປີດກອງປະຊຸມຮ່ວມກັບບັນດາລັດຖະມົນຕີຕ່າງປະເທດໃນສະຫະພາບເອີລົບ ຈຳນວນ 22 ປະເທດ, ອົງການ ສປຊ ແລະ ກຸ່ມນາໂຕ ປຶກສາຫາລື ແລະ ບໍ່ຍອມຮັບການປະກອບຄະນະລັດຖະບານຊົ່ວຄາວຂອງກຸ່ມຕາລີບັນ.

**5) ກອງປະຊຸມສະມັດຊາໃຫຍ່ ສປຊ**

ວັນທີ 14-27 ກັນຍາ 2021, ກອງປະຊຸມສະມັດຊາໃຫຍ່ ສປຊ ຄັ້ງທີ 76 ໄດ້ໄຂຂຶ້ນຢ່າງເປັນທາງການ ທີ່ ນິວຢອກ, ສ.ອາເມລິກາ, ໂດຍມີ 83 ປະມຸກລັດຂອງປະເທດສະມາຊິກເຂົ້າຮ່ວມກອງປະຊຸມຄັ້ງນີ້ ເປັນເວທີຂອງກອບການຮ່ວມມືຫຼາຍຝ່າຍ ເພື່ອເປີດໂອກາດໃຫ້ບັນດາຜູ້ເຂົ້າຮ່ວມປຶກສາຫາລືກັນໃນຫຼາຍບັນຫາສາກົນ ແລະ ພາກພື້ນ

ເປັນຕົ້ນ ການຮ່ວມມື ຜ່ານຜ່າບັນດາສິ່ງທ້າທາຍ ທີ່ໂລກກຳລັງປະເຊີນຢູ່, ເຊິ່ງຜູ້ນຳ ຂອງ ສ. ອາເມລິກາ ແລະ ຜູ້ນຳ ສປ ຈີນ ໄດ້ມີຄຳເຫັນກ່ຽວກັບບາງບັນຫາສຳຄັນ ຂອງ ປະຊາຄົມໂລກ ດັ່ງນີ້:

1. ດ້ານການປ່ຽນແປງດິນຟ້າອາກາດ: ປະທານາທິບໍດີ ສ.ອາເມລິກາ ປະກາດວ່າ ຈະຊ່ວຍປະເທດກຳລັງພັດທະນາ ໃນການແກ້ໄຂບັນຫາໂລກຮ້ອນ ໂດຍຈະເພີ່ມງົບປະມານປີລະ 11.400 ລ້ານໂດລາສະຫະລັດ; ໃນຂະນະທີ່ ທ່ານ ສີ ຈິ້ນຜິງ, ປະທານປະເທດ ຈີນ ມີຄຳເຫັນວ່າ ນອກຈາກເປົ້າໝາຍຫຼຸດການປ່ອຍອາຍກາກບອນໃນຂັ້ນສູງສຸດໃນປີ 2030 ແລະ ກ້າວສູ່ການຫຼຸດອາຍກາກບອນທັງໝົດໃຫ້ໄດ້ພາຍໃນປີ 2060 ໃນປະເທດຂອງຕົນແລ້ວ, ຈີນຈະຢຸດສິ່ງເສີມໂຮງງານທີ່ໃຊ້ພະລັງງານຖ່ານຫີນແຫ່ງໃຫມ່ຕາມເມືອງໃຫຍ່ໆ ໃນທົ່ວໂລກ ແລະ ຈະຫັນມາສະໜັບສະໜູນພະລັງງານສີຂຽວ, ພະລັງງານທົດແທນ ໃນປະເທດກຳລັງພັດທະນາ.

2. ການແກ້ໄຂບັນຫາ ໂຄວິດ-19: ສ. ອາເມລິກາ ວ່າ ຈະບໍລິຈາກ ວັກແຊງ ໄຟເຊີ 500 ລ້ານໂດສ ໃຫ້ທົ່ວໂລກ, ອາເມລິກາ ໄດ້ບໍລິຈາກວັກແຊງ 1,1 ຕື້ໂດສ ໃຫ້ທົ່ວໂລກແລ້ວໃນປັດຈຸບັນ. ພ້ອມທັງຕັ້ງເປົ້າໝາຍວ່າ ຈະສັກວັກແຊງໃຫ້ຄົນອາເມລິກາ ໃນປະເທດໃຫ້ໄດ້ 70% ໃນທ້າຍປີ 2021. ສ່ວນ ສປ ຈີນ ວ່າ ຈະບໍລິຈາກເງິນ 3 ຕື້ໂດລາສະຫະລັດ ເພື່ອຊ່ວຍເຫຼືອບັນດາປະເທດກຳລັງພັດທະນາໃນການຮັບມືກັບ ໂຄວິດ-19. ຜ່ານມາ ສປ ຈີນ ໄດ້ບໍລິຈາກວັກແຊງໃຫ້ທົ່ວໂລກແລ້ວ 100 ລ້ານໂດສ ແລະ ຈະບໍລິຈາກເງິນຕື່ມຈຳນວນ 100 ລ້ານໂດລາ ແລະ ບໍລິຈາກວັກແຊງຕື່ມ 2 ຕື້ໂດສ ໃຫ້ໂຄງການ COVAX ໃນປີ 2022.

3. ດ້ານການຕ່າງປະເທດ ແລະ ຄວາມໝັ້ນຄົງ: ສ. ອາເມລິກາ ຢ້ຳວ່າ ຕົນ ບໍ່ໄດ້ເຮັດສົງຄາມເຢັນ ກັບປະເທດໃດ ແລະ ບໍ່ໄດ້ພະຍາຍາມແຍກເປັນກຸ່ມກ້ອນແຕ່ຢ່າງໃດ. ໃນຂະນະທີ່ ສປ ຈີນ ກ່າວວ່າ ຈະບໍ່ຮຸກຮານ, ບໍ່ເອົາປຽບປະເທດໃດ, ບໍ່ໃຊ້ອຳນາດຄອບງຳປະເທດອື່ນ. ທ່ານ ສີ ຈິ້ນຜິງ ໄດ້ເນັ້ນຢ້ຳວ່າ ການພົວພັນສາກົນ ຄວນຢູ່ບົນພື້ນຖານ "ຫຼາຍຝ່າຍ" ເພື່ອຮັບປະກັນການພັດທະນາທີ່ທົ່ວເຖິງ ແລະ ເທົ່າທຽມກັນ ແລະ ເພື່ອຮັບປະກັນຄວາມໝັ້ນຄົງໃນທົ່ວໂລກ.

ວັນທີ 25/09/2021, ກອງປະຊຸມຄັ້ງທີ 65 ຂອງສະມັດຊາໃຫຍ່ສະພາພະລັງງານປະລາມະນູສາກົນ (International Atomic Energy Agency - IAEA) ທີ່ນະຄອນຫຼວງວຽນນາ, ປະເທດ ໂອຕຼິດ ໂດຍມີສະມາຊິກຈາກ 172 ປະເທດ ແລະ ອົງການຈັດຕັ້ງສາກົນເຂົ້າຮ່ວມ. ກອງປະຊຸມ ໄດ້ລົງຄະແນນສຽງເລືອກເອົາ ຫວຽດນາມ ແລະ ອີກ 10 ປະເທດ ເຂົ້າເປັນຄະນະກຳມະການບໍລິຫານສະພາພະລັງງານປະລາມະນູສາກົນ, ເຊິ່ງປະກອບມີ 35 ປະເທດ ມີໜ້າທີ່ພິເຈລະນາ ແລະ ມີຄຳເຫັນຕໍ່ກອງປະຊຸມ, ປະສານງານວຽກງານການເງິນ, ຮັບຮອງເອົາສະມາຊິກໃໝ່ ແລະ ການກວດກາລະຫວ່າງອົງການ ແລະ ປະເທດສະມາຊິກ, ກວດກາລະບຽບ, ມາດຕະການ ຂອງຄວາມໝັ້ນຄົງ ແລະ ຄວາມປອດໄພໃນການນຳໃຊ້ພະລັງງານນິວເຄຼຍ. ຫວຽດນາມ ຈະປະສານກັບ ລາວ ແລະ ກຳປູເຈຍ ເພື່ອຈັດຕັ້ງປະຕິບັດການຮ່ວມມືສາມຝ່າຍໃນການນຳໃຊ້ເຕັກໂນໂລຊີ ນິວເຄຼຍ, ເຊິ່ງເປັນໂຄງການຮ່ວມມື ຂອງອົງການດັ່ງກ່າວໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້.

### 3. ການເຄື່ອນໄຫວຂອງບັນດາພັກເພື່ອນມິດຍຸດທະສາດ

#### 1) ພັກກອມມູນິດຫວຽດນາມ

ວັນທີ 01/09/2021, ໃນໂອກາດວັນຊາດ ແຫ່ງ ສສ ຫວຽດນາມ ຄົບຮອບ 76 ປີ (2/9/1945-2/9/2021). ສະຫາຍ ຟາມ ມິນ ຈິງ, ນາຍົກລັດຖະມົນຕີ ຫວຽດນາມ ໄດ້ກ່າວປາໄສຜ່ານວີດີໂອທາງໄກ ແລະ ໄດ້ເຊື່ອມຕໍ່ ກັບ 194 ປະເທດ ເຊິ່ງມີເນື້ອໃນບາງຕອນວ່າ “ ຕະຫລອດໄລຍະ 76 ປີ ຜ່ານມາ ນັບແຕ່ ປະທານ ໂຮ່ຈີມິນ ໄດ້ອ່ານຖະແຫຼງປະກາດເອກະລາດ ຢູ່ສະໜາມຫຼວງ ແຫ່ງປະຫວັດສາດ ບາ ດິ່ງ ໃນປີ 1945 ເຮັດໃຫ້ ປະເທດຫວຽດນາມ ປະຊາທິປະໄຕ ສາທາລະນະລັດ (ສາທາລະນະລັດສັງຄົມນິຍົມຫວຽດນາມໃນປັດຈຸບັນ) ພາຍໃຕ້ການນຳພາຂອງພັກກອມມູນິດຫວຽດນາມ ປະຊາຊົນຊົນຫວຽດນາມ ໄດ້ກຳເນີດຂຶ້ນ ແລະ ໄດ້ຈາລຶກຄວາມຈິງທີ່ວ່າ "ບໍ່ມີສິ່ງໃດປະເສີດກວ່າເອກະລາດ ແລະ ເສລີພາບ", ສາມັກຄີເປັນຈິດໜຶ່ງໃຈດຽວ, ເດັດດ່ຽວຜ່ານຜ່າຄວາມຫຍຸ້ງຍາກ ເພື່ອປົກປັກຮັກສາປະເທດຊາດ, ປົກປັກຮັກສາຄວາມເປັນເອກະລາດ ແລະ ເສລີພາບຂອງປະເທດຊາດ ໄວ້ຢ່າງໜຽວແໜ້ນ, ສ້າງສາ ແລະ ພັດທະນາປະເທດ "ນັບມື້ນັບສະຫງ່າຜ່າເຜີຍຍິ່ງໃຫຍ່ ແລະ ສວຍງາມ” , ຄຽງຄູ່ກັບການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຮັກສາສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະ ການພັດທະນາໃນພາກພື້ນ ແລະ ສາກົນ.

ສະຫາຍ ຟາມ ມິນ ຈິງ, ຍັງໄດ້ທວນຄືນ 35 ປີ ບົນເສັ້ນທາງແຫ່ງການປ່ຽນແປງໃໝ່ ( Đổi Mới) ທີ່ເຕັມໄປດ້ວຍຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ, ແຕ່ຜົນສຳເລັດທີ່ຍາດມາໄດ້ນັ້ນ ກໍເປັນສິ່ງທີ່ພາກພູມໃຈທີ່ສຸດ. ຈາກທີ່ເປັນປະເທດອານານິຄົມທີ່ອ່ອນນ້ອຍ ໄດ້ເປັນປະເທດທີ່ມີປະຊາກອນເກືອບ 100 ລ້ານຄົນ, ຢູ່ໃນກຸ່ມປະເທດກຳລັງພັດທະນາ; GDP ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ, ການເຕີບໂຕສະເລ່ຍ 7% ຕໍ່ປີ; ມີຄວາມໝັ້ນຄົງທາງດ້ານການປ້ອງກັນຊາດ ແລະ ຄວາມສະຫງົບ; ມີສະຖຽນລະພາບ; ວັດທະນະທຳ, ການສຶກສາ ແລະ ສາທາລະນະສຸກ ໄດ້ຮັບຜົນສຳເລັດຢ່າງໃຫຍ່ຫຼວງ, ສັງຄົມ ມີຄວາມສະຫງົບ ແລະ ປອດໄພ; ພື້ນຖານໂຄງລ່າງ ແລະ ພື້ນຖານເສດຖະກິດນັບມື້ນັບພັດທະນາຍິ່ງຂຶ້ນ; ເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ມີການພັດທະນາຢ່າງແຂງແຮງ ຄຽງຄູ່ກັບການນຳພາຂອງລັດຖະບານໃນການເດີນໜ້າປະຕິຮູບເສດຖະກິດຢ່າງກວ້າງຂວາງເລິກເຊິ່ງ ແລະ ການປະກອບສ່ວນຈາກພາກເອກະຊົນ ແລະ ການລົງທຶນຂອງຕ່າງປະເທດ ນັບມື້ນັບເພີ່ມຂຶ້ນ; ຄວາມສາມັກຄີອັນເຂັ້ມແຂງຂອງປະຊາຊົນບັນດາເຜົ່າ ແລະ ປະຊາທິປະໄຕສັງຄົມນິຍົມ ນັບມື້ໄດ້ຮັບການເສີມຂະຫຍາຍ; ຖານະ ແລະ ກຽດສັກສີຂອງປະເທດ ນັບມື້ໄດ້ຮັບການຍົກສູງໃນເວທີສາກົນ. ປັດຈຸບັນ, ຫວຽດນາມ ມີການພົວພັນກັບຫຼາຍກວ່າ 500 ອົງການຈັດຕັ້ງສາກົນ; ການພົວພັນທາງການທູດກັບ 189/193 ປະເທດສະມາຊິກ ສປຊ; ສ້າງສາຍພົວພັນຄູ່ຮ່ວມມືຍຸດທະສາດ ແລະ ຮອບດ້ານກັບ 30 ປະເທດ; ມີການເຊື່ອມໂຍງເຂົ້າກັບຫຼາຍຂົງເຂດເສດຖະກິດເຊັ່ນ: CPTPP, RCEP, EVFTA, EVIPA.

ວັນທີ 12/9/2021, ສະພາທິດສະດີສູນກາງພັກກອມມູນິດຫວຽດນາມ ໄດ້ຈັດກອງປະຊຸມຄັ້ງທີ 1 ສະໄໝທີ 13 (2021 - 2026) ໂດຍມີບັນດາກຳມະການກົມການເມືອງສູນກາງພັກກອມມນິດ ຫວຽດນາມ ສະໄໝປັດຈຸບັນ, ປະທານສະພາທິດສະດີການເມືອງສູນກາງພັກ, ຫົວໜ້າຄະນະໂຄສະນາສຶກສາສູນກາງພັກ, ບັນດາອະດີດກຳມະກົມການເມືອງສູນກາງພັກ ເຂົ້າຮ່ວມ. ກອງປະຊຸມ ໄດ້ປຶກສາຫາລືຫຼາຍບັນຫາສຳຄັນ ຂອງ ພັກ, ຂອງຊາດ ເປັນຕົ້ນ ແມ່ນແຜນນະໂຍບາຍ ແລະ ທິດສະດີ-ພຶດຕິກຳໃນການຊີ້ນຳ-ນຳພາ, ບັນຫາເສດຖະກິດ, ຄວາມໝັ້ນຄົງພາຍໃນ, ບັນຫາພາກພື້ນ ແລະ ສາກົນ, ເຊິ່ງຫົວໜ້າສະຖາບັນການເມືອງແຫ່ງຊາດ ໂຮ່ຈີມິນ ໄດ້ກ່າວວ່າ: ໃນສະພາບການພາຍໃນ ແລະ ສາກົນ ສືບຕໍ່ຜັນແປໄປຢ່າງວ່ອງໄວ ແລະ ຕໍ່ເນື່ອງ ເຊິ່ງໄດ້ຕັ້ງຫຼາຍບັນຫາທາງດ້ານທິດສະດີ ແລະ ພຶດຕິກຳອັນໃໝ່, ມີຫຼາຍບັນຫາທີ່ບໍ່ເຄີຍມີມາກ່ອນ; ສະມາຊິກ ຂອງ ສະພາທິດສະດີສູນກາງພັກກອມມູນິດຫວຽດນາມ ສະໄໝແຕ່ປີ 2021 – 2026 ປະກອບມີ 50 ສະຫາຍ, ມີຈຳນວນຫຼາຍກ່ວາ ແຕ່ລະສະໄໝທີ່ຜ່ານມາ. ກອງປະຊຸມຍັງໄດ້ສະເໜີຮ່າງແຜນການເຄື່ອນໄຫວ, ບັນດາເນື້ອໃນວຽກງານຕົ້ນຕໍ ແລະ ແຜນງານຂອງສະພາທິດສະດີສູນກາງ ແລະ ຮ່າງກົດລະບຽບ ຂອງ ບັນດາອະນຸກຳມະການ ຂອງສະພາ.

ວັນທີ 19/9/2021, ສະຫາຍ ຫງວຽນ ຊວນ ຟຸກ, ປະທານປະເທດ ແຫ່ງ ສສ ຫວຽດນາມ ໄດ້ຢ້ຽມຢາມສາທາລະນະລັດ ກູບາ ຢ່າງເປັນທາງການ ແລະ ພົບປະກັບ ສະຫາຍ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກ, ປະທານປະເທດກູບາ. ສອງຝ່າຍໄດ້ລົງນາມໃນສົນທິສັນຍາແລກປ່ຽນເຕັກນິກການຜະລິດຢາວັກແຊງ Abdala ຂອງກູບາ. ໃນປີ 2020, ສອງຝ່າຍບັນລຸມູນຄ່າການຄ້າຮ່ວມກັນ 178,5 ລ້ານ ໂດລາສະຫະລັດ, ຫຼຸດລົງ 21,3% ທຽບໃສ່ປີ 2019 ຍ້ອນຜົນກະທົບຈາກພະຍາດໂຄວິດ - 19. ພ້ອມກັນນັ້ນ, ສະຫາຍ ຫງວຽນຊວນຟຸກ ຍັງເຂົ້າຮ່ວມ ກອງປະຊຸມ ສະມັດຊາໃຫຍ່ ສປຊ ຄັ້ງທີ 76 ແລະ ມີຄຳເຫັນບາງຕອນວ່າ “ ຄວາມສຳຄັນຂອງການຮ່ວມມືສາກົນ, ແບບຫຼາຍຝ່າຍ ແລະ ສ້າງຄວາມໄວ້ເນື້ອເຊື່ອໃຈ ຕໍ່ການແກ້ໄຂບັນຫາ ແລະ ສິ່ງທ້າທາຍຕ່າງໆ ເຊັ່ນ: ບັນຫາການແຜ່ລະບາດຂອງພະຍາດໂຄວິດ - 19, ການປ່ຽນແປງດິນຟ້າອາກາດ, ຊຸກຍູ້ ແລະ ສົ່ງເສີມການພັດທະນາແບບຍືນຍົງ, ການເຄົາລົບກົດໝາຍສາກົນ, ສະກັດກັ້ນ ແລະ ແກ້ໄຂຂໍ້ຂັດແຍ້ງຢ່າງສັນຕິວິທີ.” ຫວຽດນາມ ຈະສືບຕໍ່ສົ່ງເສີມສາຍພົວພັນມິດຕະພາບ, ການຮ່ວມມືຫຼາຍຮູບແບບ, ຄູ່ຮ່ວມມືເພື່ອນມິດຍຸດທະສາດ ເຂົ້າສູ່ລວງເລິກ ແລະ ມີປະສິດທິຜົນ. ໃນໂອກາດດັ່ງກ່າວ, ສະຫາຍ ຫງວຽນຊວນຟຸກ ຍັງໄດ້ພົບປະສອງຝ່າຍກັບບັນດານັກທຸລະກິດ, ຜູ້ປະກອບການ ແລະ ບໍລິສັດ ຂອງ ສ. ອາເມລິກາ ເພື່ອປຶກສາຫາລື ແລະ ຮ່ວມມືທາງດ້ານການສົ່ງເສີມການລົງທຶນ ໃນຫວຽດນາມ ແລະ ໃນຂະນະດຽວກັນ ສະຫາຍ ບຸຍແທັງເຊີນ, ລັດຖະມົນຕີຕ່າງປະເທດຫວຽດນາມ ກໍໄດ້ ພົບປະກັບຄູ່ຮ່ວມຕຳແໜ່ງຈາກປະເທດ ໄທ, ອິນເດຍ, ອີຣານ, ອາຣັບບີ ຊາອຸດີດ, ຮົງກາລີ ແລະ ອານເຊຣີ ເພື່ອເພີ່ມທະວີການຮ່ວມມືທາງດ້ານການເມືອງ, ການທູດ, ເສດຖະກິດ, ການຄ້າ, ການລົງທຶນ, ການທ່ອງທ່ຽວ ແລະ ການຕ້ານພະຍາດໂຄວິດ - 19.

ວັນທີ 24/9/2021, ສະຫາຍ ຫງວຽນຟູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ສົນທະນາທາງໂທລະສັບກັບ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດແຫ່ງ ສປ ຈີນ, ເຊິ່ງ ສະຫາຍ ຫງວຽນຟູຈ້ອງ ໄດ້ສະແດງຄວາມຂອບໃຈຢ່າງສູງ ຕໍ່ ສປ ຈີນ ທີ່ໄດ້ແລກປ່ຽນບົດຮຽນ ແລະ ຊ່ວຍເຫຼືອວັກຊີນປ້ອງກັນໂຄວິດ -19 ໃຫ້ ສສ ຫວຽດນາມ. ສອງຝ່າຍ ຖືສຳຄັນການພົວພັນແບບບ້ານໃກ້ເຮືອນຄຽງ, ມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມມືຍຸດທະສາດຮອບດ້ານ. ເຫັນດີເສີມຂະຫຍາຍການພົວພັນດ້ານການເມືອງ, ສືບຕໍ່ປັງປຸງເພີ່ມທະວີການຮ່ວມມື ເພື່ອເປັນກຳລັງຍູ້ແຮງການພັດທະນາສອງປະເທດ, ສືບຕໍ່ຈັດຕັ້ງປະຕິບັດຢ່າງເຄັ່ງຄັດ ບັນດາຂໍ້ຕົກລົງ ໃນນັ້ນມີຂໍ້ຕົກລົງການຄ້າເສລີ ແລະ ເສດຖະກິດລຽບຕາມຊາຍແດນ; ສືບຕໍ່ອຳນວຍຄວາມສະດວກໃຫ້ແກ່ການຄ້າຂອງສອງປະເທດ, ຍົກລະດັບການລົງທຶນໃນໂຄງການໃຫຍ່ໆ, ສືບຕໍ່ປະສານສົມທົບຢ່າງສະໜິດແໜ້ນໃນການຄຸ້ມຄອງ, ປົກປັກຮັກສາຊາຍແດນ, ປະຕິບັດຢ່າງເຄັ່ງຄັດບັນດາເອກະສານດ້ານກົດໝາຍກ່ຽວກັບຊາຍແດນທາງບົກລະຫວ່າງສອງປະເທດ, ສ້າງຊາຍແດນສັນຕິພາບ, ໝັ້ນຄົງ, ຮ່ວມມືແລະ ພັດທະນາ; ປະສານສົມທົບໃນບັນດາເວທີຫຼາຍຝ່າຍ, ສືບຕໍ່ຍົກສູງປະສິດທິຜົນການຮ່ວມມືທາງທະເລ, ຍູ້ແຮງການເຈລະຈາ, ປຶກສາຫາລື ກຳນົດ ແລະ ດຳເນີນການຮ່ວມມື, ແກ້ໄຂຢ່າງສົມເຫດສົມຜົນບັນດາບັນຫາທາງທະເລ, ປະສານສົມທົບຢ່າງມີປະສິດທິຜົນໃນການຮ່ວມມືຢ່າງຕັ້ງໜ້າກັບ ASEAN ໃນຄວາມພະຍາຍາມສ້າງກົດແຫ່ງການປະພຶດ (COC) ຂອງບັນດາຝ່າຍໃນທະເລຈີນໃຕ້ ໃຫ້ມີປະສິດທິຜົນ, ພາຍໃຕ້ກົດໝາຍສາກົນ, ສົນທິສັນຍາວ່າດ້ວຍກົດໝາຍທາງທະເລ ປີ 1982. ສອງປະເທດ ຄວນສືບຕໍ່ແລກປ່ຽນ, ປຶກສາຫາລືຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການທີ່ເໝາະສົມ, ຍູ້ແຮງການເຊື່ອມໂຍງຍຸດທະສາດ, ກາຍເປັນຈຸດພົ້ນເດັ່ນໃໝ່ໃນການພົວພັນລະຫວ່າງສອງປະເທດໂດຍໄວ.

**2) ພັກກອມມູນິດຈີນ**

ວັນທີ 3/9/2021, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືເສດຖະກິດຕາເວັນອອກ ຄັ້ງທີ 6 ແລະ ມີຄຳເຫັນຜ່ານທາງວິດີໂອວ່າ: ວັນທີ 3 ກັນຍານີ້ ແມ່ນວັນລະນຶກສົງຄາມປະຊາຊົນຈີນ ຕໍ່ຕ້ານຟາຊິດຍີ່ປຸ່ນ ມາຮຸກຮານ ແລະ ສົງຄາມຕ້ານຟາຊິດຂອງໂລກ ໄດ້ຮັບໄຊຊະນະຄົບຮອບ 76 ປີ; ປະຊາຄົມໂລກ ຄວນເດັດດ່ຽວປົກປັກຮັກສາໝາກຜົນແຫ່ງໄຊຊະນະຂອງສົງຄາມໂລກ ຄັ້ງທີ 2, ປົກປັກຮັກສາປະຫວັດສາດ, ຍຶດໝັ້ນການຖືເອົາປະຫວັດສາດເປັນແນວທາງພັດທະນາ ແລະ ປະດິດສ້າງອະນາຄົດ. ປັດຈຸບັນສະພາບການຂອງໂລກ ໄດ້ມີການປ່ຽນແປງຢ່າງເລິກເຊິ່ງ, ການແຜ່ລະບາດຂອງພະຍາດໂຄວິດ-19 ມີຄວາມບໍ່ແນ່ນອນ, ການຟື້ນຟູເສດຖະກິດໂລກຄືນໃໝ່ ພົບກັບຄວາມລຳບາກ ແລະ ການຮ່ວມມືຂອງພາກພື້ນອາຊີຕາເວັນອອກສຽງເໜືອພວມປະເຊີນໜ້າກັບສິ່ງທ້າທາຍ. ຝ່າຍຕ່າງໆ ຄວນອີງໃສ່ພາກພື້ນ ແລະ ສາກົນ, ຮ່ວມກັນຜ່ານຜ່າຄວາມຫຍຸ້ງຍາກແລະ ສະແຫວງຫາການພັດທະນາຮ່ວມກັນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນການຮັບມືກັບພະຍາດໂຄວິດ-19, ຊຸກຍູ້ການຮ່ວມມືແບບຕ່າງຝ່າຍຕ່າງມີຜົນປະໂຫຍດ, ລົງເລິກການຮ່ວມມື ເພື່ອເຊື່ອມຈອດການຮ່ວມກັນສ້າງ "ໜຶ່ງແລວໜຶ່ງເສັ້ນທາງ" ກັບສະຫະພັນເສດຖະກິດເອີລົບ-ອາຊີ, ສະໜັບສະໜູນການປະດິດສ້າງໃໝ່ ແລະ ການພັດທະນາເສດຖະກິດດີຈີຕອນ, ຮ່ວມກັນຮັບມືກັບການປ່ຽນແປງຂອງດິນຟ້າອາກາດ, ຊຸກຍູ້ການພັດທະນາເສດຖະກິດສັງຄົມຂອງພາກພື້ນ, ຮ່ວມໃຈກັນໃນການປົກປັກຮັກສາສັນຕິພາບ ແລະ ສະຖຽນລະພາບຂອງພາກພື້ນ, ຜ່ານການສົນທະນາແລະ ແລກປ່ຽນຄວາມຄິດເຫັນ ເພື່ອແກ້ໄຂຄວາມເຫັນທີ່ຂັດແຍ່ງກັນ, ເຕົ້າໂຮມຄວາມເຫັນທີ່ເປັນເອກະພາບກັນ, ສ້າງທັດສະນະກ່ຽວກັບຄວາມໝັ້ນຄົງຮ່ວມ, ສັງລວມການຮ່ວມມື ແລະ ຍືນຍົງ, ຮ່ວມມືກັນສ້າງບ້ານເມືອງຮ່ວມກັນຢ່າງກົມກຽວ ແລະ ສະຫງົບສຸກ. ຈີນ ໄດ້ເປີດຂະບວນການໃໝ່ ໃນການສ້າງສາປະເທດສັງຄົມນິຍົມທີ່ທັນສະໄໝຢ່າງຮອບດ້ານ, ຍິນດີຮ່ວມກັບຝ່າຍຕ່າງໆສຸມຄວາມພະຍາຍາມ, ປະຕິບັດຕາມລັດທິຫຼາຍຝ່າຍຢ່າງແທ້ຈິງ, ສ້າງຄວາມໄວ້ເນື້ອເຊື່ອໃຈກັນ ແລະ ຄວາມປອງດອງກັນ, ຮ່ວມມືກັນແບບຕ່າງຝ່າຍຕ່າງມີຜົນປະໂຫຍດ, ກ້າວໄປສູ່ເປົ້າໝາຍຊຸກຍູ້ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດຢ່າງໜັກແໜ້ນ.

ວັນທີ 14/9/2021, ສະຫາຍ ຊົ່ງທາວ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສົນທະນາຜູ້ນຳພັກການເມືອງລະຫວ່າງ ສປ ຈີນ - ອາເມລິກາ (ພັກດີໂມ

ແຖວ ແລະ ພັກລີພັບລີກັນ) ຄັ້ງທີ 12 ຜ່ານວິດີໂອທາງໄກ ເພື່ອເພີ່ມທະວີການສື່ສານ, ຄວາມເຂົ້າໃຈ ແລະ ສົ່ງເສີມຄວາມເຊື່ອໝັ້ນຫຼາຍຝ່າຍລະຫວ່າງສອງປະເທດ. ກອງປະຊຸມໄດ້ປຶກສາຫາລືກ່ຽວກັບບົດບາດຂອງພັກການເມືອງ ໃນການພັດທະນາການພົວພັນຮ່ວມມືສອງຝ່າຍ, ສະເໜີສະພາບການພາຍໃນຂອງຕົນ ແລະ ແລກປ່ຽນຄຳເຫັນກ່ຽວກັບມຸມມອງສາຍພົວພັນຮ່ວມມືສອງຝ່າຍ. ສອງຝ່າຍເຫັນດີເພີ່ມທະວີການສື່ສານ ແລະ ປະສານງານກ່ຽວກັບບັນຫາພາກພື້ນ ແລະ ສາກົນ ເພື່ອສົ່ງເສີມການພັດທະນາສາຍພົວພັນຮ່ວມມືສອງປະເທດ ແລະ ປະກອບສ່ວນເຂົ້າໃນການສົ່ງເສີມສັນຕິພາບ, ຄວາມໝັ້ນຄົງ ແລະ ຄວາມຈະເລີນຮຸ່ງເຮືອງຂອງໂລກ. ສປ ຈີນ ແລະ ອາເມລິກາ ເປັນປະເທດທີ່ກຳລັງພັດທະນາ ແລະ ພັດທະນາແລ້ວ ທີ່ໃຫຍ່ທີ່ສຸດ, ການຮ່ວມມືຂອງສອງປະເທດ ມີອິດທິພົນຕໍ່ພາກພື້ນ ແລະ ສາກົນ, ສະຖຽນລະພາບ ແລະ ຄວາມສົມບູນຂອງສາຍພົວພັນສອງຊາດ ແມ່ນຖືກຫຼາຍປະເທດໃນພາກພື້ນ ແລະ ສາກົນ ໃຫ້ຄວາມສົນໃຈ ແລະ ຕິດຕາມຢ່າງໃກ້ຊິດ. ສອງປະເທດ ຄວນປະຕິບັດຕາມການຕົກລົງຂອງສອງຜູ້ນຳ ໂດຍການເຄົາລົບເຊິ່ງກັນ ແລະ ກັນ, ປະຕິບັດຕໍ່ກັນບົນພື້ນຖານຄວາມສະເໝີພາບ, ແກ້ໄຂບັນຫາຮ່ວມກັນ ແລະ ຮັກສາຜົນປະໂຫຍດຫຼັກຂອງກັນ ແລະ ກັນ. ສປ ຈີນ ມີຄວາມຍິນດີ ທີ່ຈະຮ່ວມມືກັບສອງພັກການເມືອງ ຂອງ ອາເມລິກາ ແລະ ໃຫ້ຄວາມສຳຄັນຕໍ່ກັບການນຳພາຂອງພັກ ໃນວົງຄະນະຍາດສາກົນ. ຝ່າຍ ອາເມລິກາ ມີຄຳເຫັນວ່າ “ ສາຍພົວພັນຂອງສອງປະເທດມີຄວາມສຳຄັນຕໍ່ສອງຝ່າຍ ແລະ ສາກົນ. ອາເມລິກາ ແລະ ຈີນ ໄດ້ມີການແຂ່ງຂັນກັນຫຼາຍຂຶ້ນຢ່າງຈະແຈ້ງໃນປະຈຸບັນ. ແຕ່ສອງປະເທດຍັງມີການເພິ່ງພາອາໄສກັນເປັນຕົ້ນແມ່ນ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ, ການແຜ່ລະບາດຂອງພະຍາດໂຄວິດ - 19, ການຟື້ນຟູເສດຖະກິດ ແລະ ຮ່ວມກັນແກ້ໄຂບັນຫາທີ່ເກີດຂຶ້ນໃນພາກພື້ນ ແລະ ສາກົນ.

**3) ພັກແຮງງານເກົາຫຼີ**

ວັນທີ 07/09/2021, ສະຫາຍ ກິມ ເຈິງອຸນ, ເລຂາທິການໃຫຍ່, ປະທານປະເທດ ສປປ ເກົາຫຼີ ໄດ້ເປັນປະທານກອງປະຊຸມກົມການເມືອງສູນກາງພັກແຮງງານເກົາຫຼີ. ກອງປະຊຸມ ໄດ້ປຶກສາຫາລື ແລະ ຮັບຮອງເອົາເລືອກຕັ້ງຕຳແໜ່ງການນຳ ຈຳນວນໜຶ່ງ ເຊັ່ນ: ສະຫາຍ Pak Jong-Chon, ຮອງປະທານວຽກງານປ້ອງກັນຊາດ ເປັນກຳມະການກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກແຮງງານເກົາຫຼີ; ສະຫາຍ Ring Kwang – il, ຫົວໜ້າຫ້ອງການສືບຂ່າວລັບກອງທັບ ເປັນກຳມະການສຳຮອງສູນກາງພັກ, ຫົວໜ້າກົມໃຫຍ່ກອງທັບ; ສະຫາຍ Jang Jong - Nam, ຫົວໜ້າກົມໃຫຍ່ກອງທັບ ເປັນກຳມະການສຳຮອງສູນກາງພັກ, ລັດຖະມົນຕີປ້ອງກັນຄວາມສະຫງົບ. ກຳມະການກົມການເມືອງສູນກາງພັກປະກອບມີ 05 ສະຫາຍຄື: ສະຫາຍ ກິມ ເຈິງອຸນ, ເລຂາທິການໃຫຍ່; ສະຫາຍ Choe Ryong – hea, ຮອງປະທານປະເທດ, ປະທານສະພາປະຊາຊົນ; ສະຫາຍ JoYong – Won, ເລຂາທິການວຽກງານຈັດຕັ້ງສູນກາງພັກ; ສະຫາຍ Kim Tok – hun, ນາຍົກລັດຖະມົນຕີ; ສະຫາຍ PakJong – Chon, ຄະນະເລຂາທິການສູນກາງພັກ, ຮອງປະທານວຽກງານປ້ອງກັນຊາດ.

ວັນທີ 09/09/2021, ສປປ ເກົາຫຼີ ໄດ້ຈັດພິທີເດີນສວນສະໜາມ ເພື່ອເປັນການສະເຫຼີມສະຫຼອງວັນສ້າງຕັ້ງ ສປປ ເກົາຫຼີ ຄົບຮອບ 73 ປີ, ໂດຍມີການສະແດງສິລະປະວັນນະຄະດີ, ການເດີນສວນສະໜາມຂອງມວນຊົນ ແລະ ກອງກຳລັງທະຫານພ້ອມດ້ວຍອາວຸດຈຳນວນໜຶ່ງ ທີ່ເດີ່ນຈະຕຸລັດ ກິມ ອິວ ຊຸງ ໃນນະຄອນຫຼວງພຽງຢາງ. ຂະນະດຽວກັນ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຈີນ ແລະ ສະຫາຍ ວາລາເດເມຍ ປູຕິນ, ປະທານາທິບໍດີ ລັດເຊຍ ກໍໄດ້ສົ່ງສານອວຍພອນເຖິງ ສະຫາຍ ກິມ ເຈິງອຸນ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ.

ກອງປະຊຸມສະໄໝສາມັນຄັ້ງທີ 5 ຂອງສະພາປະຊາຊົນສູງສຸດ ຊຸດທີ 14 ຂອງ ສປປ ເກົາຫຼີ ໄດ້ໄຂຂຶ້ນໃນວັນທີ 28/09/ - 03/10/2021 ໂດຍການເປັນປະທານຂອງ ສະຫາຍ Choe Ryong Hae, ຄະນະປະທານກົມການເມືອງສູນກາງພັກ, ຮອງປະທານກຳມະທິການວຽກງານແຫ່ງລັດຜູ້ທີໜຶ່ງ, ປະທານຄະນະກຳມະການສະພາປະຊາຊົນ ສປປ ເກົາຫຼີ ແລະ ສະຫາຍ Kim Tok Hun, ຄະນະປະທານກົມການເມືອງຄະນະບໍລິຫານງານສູນກາງພັກ, ນາຍົກລັດຖະມົນຕີ ສປປ ເກົາຫຼີ ແລະ ບັນດາການນຳຂັ້ນສູງເຂົ້າຮ່ວມ. ກອງປະຊຸມ ໄດ້ປຶກສາຫາລືວຽກງານສຳຄັນຂອງຊາດ ເປັນຕົ້ນ ການປັບປຸງຮ່າງກົດໝາຍວ່າດ້ວຍຕົວເມືອງ ແລະ ຊານເມືອງ, ແກ້ໄຂ ແລະ ປັບປຸງກົດໝາຍວ່າດ້ວຍແຜນການເສດຖະກິດແຫ່ງຊາດ, ປຶກສາຫາລືຜົນການຈັດຕັ້ງປະຕິບັດ, ກວດກາກົດໝາຍວ່າດ້ວຍ ການນຳໃຊ້ຄືນໃໝ່

(Recycle), ປ່ຽນຊື່ການບໍລິຫານການບິນແຫ່ງລັດ ແລະ ວຽກງານອື່ນໆ. ສະຫາຍ ກິມ ເຈິງອຸນ, ໄດ້ມີຄໍາເຫັນວ່າ ຈະຟື້ນຟູການຕິດຕໍ່ສື່ສານສາຍດ່ວນລະຫວ່າງ ສອງເກົາຫຼີ ໃນຕົ້ນເດືອນ ຕຸລາ 2021 ນີ້ ເພື່ອເປັນການສະແດງໃຫ້ເຫັນເຖິງເຈດຈໍານົງ ແລະ ຄວາມພະຍາຍາມໃນການປັບປຸງສາຍພົວພັນ ແລະ ສ້າງສະຖຽນລະພາບໃນແຫຼມເກົາຫຼີ, ແລະ ໃນບັນຫານີ້ແມ່ນຂຶ້ນກັບ ສ.ເກົາຫຼີ ທີ່ຈະກໍານົດເສັ້ນທາງການພົວພັນຂອງສອງເກົາຫຼີໃນອະນາຄົດ. ສ່ວນນະໂຍບາຍທີ່ບໍ່ເປັນມິດຂອງ ສ. ອາເມລິກາ ແມ່ນຍັງບໍ່ປ່ຽນແປງ, ຂໍ້ສະເໜີເຈລະຈາໂດຍບໍ່ມີເງື່ອນໄຂ ແມ່ນກົນອຸບາຍທີ່ເຊື່ອງຊ້ອນທີ່ບໍ່ເປັນມິດ.

**4) ພັກກອມມູນິດກູບາ**

ວັນທີ 09 ກັນຍາ 2021, ທ່ານ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກ, ປະທານປະເທດກູບາ ແລະ ທ່ານ Bruno Rodríguez Parrilla ລັດຖະມົນຕີກະຊວງການຕ່າງປະເທດກູບາ ໄດ້ຕ້ອນຮັບ ທ່ານ Evo Morales Ayma , ອະດີດປະທານາທິບໍດີໂບລີວີ, ປະທານພັກຂະບວນການເຄື່ອນໄຫວເພື່ອສັງຄົມນິຍົມຂອງໂບລີວີ. ສອງຝ່າຍໄດ້ປຶກສາຫາລື ແລະ ແລກປ່ຽນຄໍາເຫັນກ່ຽວກັບບັນຫາພາກພື້ນ ແລະ ສາກົນ; ທ່ານ Miguel Díaz ໄດ້ສະແດງຄວາມຂອບໃຈຢ່າງສູງ ຕໍ່ ທ່ານ Evo  ທີ່ໃຫ້ການຊ່ວຍເຫຼືອເຄື່ອງອຸປະໂພກ-ບໍລິໂພກ, ອຸປະກອນທາງການແພດ ແລະ ໃຫ້ການສະໜັບສະໜູນລັດຖະບານກູບາ ພ້ອມທັງຮຽກຮ້ອງໃຫ້ອາເມລິກາ ຍົກເລີກການປິດລ້ອມຕໍ່ ກູບາ.

ວັນທີ 14 ກັນຍາ 2021 ທ່ານ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກ,  ປະທານປະເທດກູບາ ຢ້ຽມຢາມ ແລະ ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນເອກະລາດຂອງປະເທດແມັກຊິໂກ ຄົບຮອບ 211 ປີ (ວັນທີ 16 ກັນຍາ 1810) ແລະ ເຂົ້າຮ່ວມກອງປະຊຸມສຸດຍອດຂອງປະຊາຄົມບັນດາປະເທດອາເມລິກາລາຕິນ ແລະ ກາຣິບຽນ (CELAC) ຄັ້ງທີ VI ໃນວັນທີ 18 ກັນຍາ 2021, ເຊິ່ງມີຈໍານວນສະມາຊິກ 33 ປະເທດ ໂດຍໄດ້ປຶກສາຫາລືກ່ຽວກັບບັນຫາການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ຄວາມປອດໄພທາງດ້ານສະບຽງອາຫານ, ເຕັກໂນໂລຊີ, ການສຶກສາ, ຄວາມສະເໝີພາບ ແລະ ກົນໄກການພົວພັນຂອງພາກພື້ນ ແລະ ສາກົນ.

ວັນທີ 23 ກັນຍາ 2021, ສະຫາຍ Miguel Díaz-Canel Bermúdez, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກ, ປະທານປະເທດກູບາ ໄດ້ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ ສປຊ ຄັ້ງທີ 76 ທີ່ນິວຢອກ ແລະ ມີຄໍາເຫັນວ່າ: ກູບາ ໄດ້ສໍາເລັດການຜະລິດຢາວັກແຊງຕ້ານໂຄວິດ-19 ແລະ ສາມາດສັກໃຫ້ປະຊາຊົນ ຂອງຕົນໄດ້ແລ້ວປະມານ 15.8 ລ້ານເຂັມ (37,8%), ຄາດວ່າໃນທ້າຍປີ 2021 ປະຊາຊົນກູບາ ຈະໄດ້ຮັບວັກແຊງຄົບທຸກຄົນ. ສະຫາຍ Miguel ຍັງໄດ້ຢໍ້າເຖິງຄວາມສໍາຄັນ ຂອງການພົວພັນຫຼາຍຝ່າຍ ແລະບົດບາດ ຂອງ ສປຊ ນັບມື້ໄດ້ຮັບການສະໜັບສະໜູນຫຼາຍຂຶ້ນ ແລະ ກ່າວປະນາມການຂວໍ້າບາດຝ່າຍດຽວ ຂອງ ສ.ອາເມລິກາ ແລະ ພັນທະມິດ ນາໂຕ້ ຕໍ່ ກູບາ, ເວເນຊູເອລາ, ອີຣານ, ສປປ ເກົາຫຼີ ແລະ ຣັດເຊຍ. ກູບາ ຮຽກຮ້ອງໃຫ້ ສ.ອາເມລິກາ ຢຸດຕິການແຊກແຊງກິດຈະການພາຍໃນ ຂອງ ເບລາຣຸດຊີ ແລະ ກູບາ, ຢືນຢັນການສະໜັບສະໜູນຫຼັກການຈີນດຽວ ແລະ ບໍ່ເຫັນດີຕໍ່ການແຊກແຊງໃດໆທີ່ຈະທໍາລາຍອະທິປະໄຕຂອງ ສປ.ຈີນ.

<u>**ແຫຼ່ງຂ່າວອ້າງອີງ:**</u> Vietnam News, Vietnam- Express, CNA, Global Times, Kpl, Sputnik, Khmer Times, The JakataPost, Yonhap, Rodong Sinnum, BBC, NHK, Aljazeera, CGTN.

# II. ການເຄື່ອນໄຫວວຽກງານ ຂອງການນໍາພັກ ປປ ລາວ

## 1. ການພົບປະຜູ້ນໍາ 3 ພັກ ລາວ-ຫວຽດນາມ-ກໍາປູເຈຍ



ໃນວັນທີ 26 ກັນຍາ 2021, ທີ່ສໍານັກງານສູນກາງພັກກອມມູນິດຫວຽດນາມ ທີ່ ນະຄອນຫຼວງ ຮ່າໂນ້ຍ, ສສ ຫວຽດນາມ, ໄດ້ມີການພົບປະຜູ້ນໍາ 3 ພັກ ລາວ-ຫວຽດນາມ-ກໍາປູເຈຍ ລະຫວ່າງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ພັກປະຊາຊົນປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາວ, ສະຫາຍ ຫງວຽນ ຟູ ຈ້ອງ, ເລຂາທິການໃຫຍ່ ພັກກອມມູນິດຫວຽດນາມ ແລະ ສົມເດັດ ອັກຄະມະຫາເສນາບໍດີ ເຕໂຈ ຮຸນເຊັນ, ປະທານພັກປະຊາຊົນກໍາປູເຈຍ, ນາຍົກລັດຖະມົນຕີ ແຫ່ງລາຊາອານາຈັກ ກໍາປູເຈຍ. ຜູ້ນໍາຂອງທັງ 3 ພັກ ໄດ້ຕີລາຄາສູງ ຕໍ່ຄວາມໝາຍຄວາມສໍາຄັນຂອງການພົບປະ; ໄດ້ແຈ້ງໃຫ້ກັນຊາບກ່ຽວກັບສະພາບການຂອງແຕ່ລະພັກ, ແຕ່ລະປະເທດ, ໃນນັ້ນລວມມີ ວຽກງານພັກ, ການພັດທະນາເສດຖະກິດ-ສັງຄົມ, ພິເສດແມ່ນບັນຫາທີ່ສາມປະເທດພວມສຸມໃສ່ການປ້ອງກັນ ແລະ ສະກັດກັ້ນການລະບາດຂອງພະຍາດ ໂຄວິດ-19. ພ້ອມທັງໄດ້ແລກປ່ຽນກ່ຽວກັບສະພາບການຮ່ວມມືໃນໄລຍະຜ່ານມາ; ປຶກສາຫາລືກ່ຽວກັບທິດທາງການຮ່ວມມືໃນຕໍ່ໜ້າ; ພ້ອມກັນເປັນເອກະພາບກ່ຽວກັບຄວາມສໍາຄັນຂອງສາຍພົວພັນທີ່ເປັນມູນເຊື້ອ, ສາມັກຄີມິດຕະພາບ ແລະ ສະໜິດຕິດພັນລະຫວ່າງສາມພັກ ແລະ ສາມປະເທດ. ຜູ້ນໍາສາມປະເທດ ໄດ້ເປັນເອກະພາບຈະເພີ່ມທະວີການຮ່ວມມືໃນຂົງເຂດຕ່າງໆ; ເສີມຂະຫຍາຍປະສິດທິຜົນຂອງບັນດາກົນໄກຮ່ວມມືທີ່ມີໃນປັດຈຸບັນ ແລະ ສືບຕໍ່ແລກປ່ຽນ, ຮ່ວມມືໃນຂົງເຂດຕ່າງໆໃນໄລຍະຕໍ່ໜ້າ, ເພື່ອຜົນປະໂຫຍດຂອງປະຊາຊົນສາມຊາດ, ເພື່ອສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະ ການພັດທະນາຢູ່ໃນພາກພື້ນ ແລະ ໃນໂລກ.

2. ສະຫາຍ ປອ. ສິນລະວົງ ຄຸດໄພທູນ ເຂົ້າຮ່ວມກອງປະຊຸມສົນທະນາ ລະຫວ່າງ ພັກກອມມູນິດຈີນ ແລະ ພັກການເມືອງປະເທດອາຊີອາຄະເນ ແລະ ອາຊີໃຕ້




ໃນວັນທີ 9 ກັນຍາ 2021, ສະຫາຍ ປອ. ສິນລະວົງ ຄຸດໄພທູນ, ກຳມະການກົມການເມືອງສູນກາງພັກ, ປະທານສູນກາງແນວລາວສ້າງຊາດ ໄດ້ນຳພາຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມສົນທະນາ ລະຫວ່າງ ພັກກອມມູນິດຈີນ ແລະ ພັກການເມືອງປະເທດອາຊີອາຄະເນ ແລະ ອາຊີໃຕ້ ຜ່ານວີດີໂອທາງໄກ, ທີ່ໄດ້ຈັດຂຶ້ນຢູ່ໝານນິງ, ເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ, ສປ ຈີນ ພາຍໃຕ້ຫົວຂໍ້: “ເພີ່ມທະວີການຮ່ວມມືພັກການເມືອງ ເພື່ອພ້ອມກັນສະແຫວງຫາການພັດທະນາເສດຖະກິດ” ໂດຍການເປັນເຈົ້າພາບຮ່ວມ ຂອງຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ແລະ ຄະນະບໍລິຫານງານພັກເຂດປົກຄອງຕົນເອງ ເຜົ່າຈ້ວງ ກວາງຊີ ເຊິ່ງມີຜູ້ຕາງໜ້າຈາກ 40 ກວ່າພັກການເມືອງ ຈາກ 16 ປະເທດໃນອາຊີອາຄະເນ ແລະ ອາຊີໃຕ້ ແລະ ສປ ຈີນ ເຂົ້າຮ່ວມ. ເຊິ່ງ ສະຫາຍ ປອ. ສິນລະວົງ ຄຸດໄພທູນ ໄດ້ມີຄຳເຫັນສະແດງຄວາມຊົມເຊີຍ ວັນສ້າງຕັ້ງພັກກອມມູນິດຈີນ ຄົບ ຮອບ 100 ປີ ໃນປີ 2021 ແລະ ຍົກໃຫ້ເຫັນແນວທາງນະໂຍບາຍຂອງພັກ ປປ ລາວ ທີ່ຍຶດໝັ້ນການພັດທະນາເສດຖະກິດເປັນໃຈກາງ ຕິດພັນກັບການພັດທະນາສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມ ໄປຕາມທິດການພັດທະນາສີຂຽວ ແລະ ຍືນຍົງ, ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂອງພັກ ຄັ້ງທີ XI, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ກໍ່ຄື ຍຸດທະສາດການພັດທະນາຮອດປີ 2025 ແລະ ວິໄສທັດ 2030 ຂອງພັກ ເພື່ອນຳພາປະເທດຊາດອອກຈາກສະຖານະດ້ອຍພັດທະນາ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ການປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ 2030 ໃຫ້ມີປະສິດທິຜົນສູງ ທັງຮັບປະກັນການສະກັດກັ້ນຕ້ານເຊື້ອພະຍາດໂຄວິດ-19, ຍຶດໝັ້ນການເສີມຂະຫຍາຍການພົວພັນຮ່ວມມືຫຼາຍຝ່າຍດ້ານພັກ ລວມທັງການຮ່ວມມືໃນກອບພັກກອມມູນິດຈີນ ກັບ ພັກການເມືອງປະເທດອາຊີອາຄະເນ ແລະ ອາຊີໃຕ້ການປະສານສົມທົບແໜ້ນ ລະຫວ່າງ ຍຸດທະສາດການເຊື່ອມຈອດ ແລະ ເຊື່ອມໂຍງຂອງ ສປປ ລາວ ກັບ ຂໍ້ລິເລີ່ມໜຶ່ງແລວໜຶ່ງເສັ້ນທາງ (BRI) ເພື່ອຫັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ເປັນປະເທດເຊື່ອມຕໍ່ໃນອະນຸພາກພື້ນ ອັນພົ້ນເດັ່ນ ແມ່ນການປະຕິບັດໂຄງການເຊື່ອມຈອດທາງລົດໄຟອາຊຽນ ສິງກະໂປ-ຄຸນມິງ, ໃນນີ້ ເສັ້ນທາງລົດໄຟລາວ-ຈີນ ແມ່ນໃກ້ຈະສຳເລັດການກໍ່ສ້າງ ແລະ ມີແຜນເປີດນຳໃຊ້ໃນຕົ້ນເດືອນທັນວາ 2021 ນີ້; ຢືນຢັນຄວາມໝາຍໝັ້ນຂອງພັກ ປປ ລາວ ໃນການສືບຕໍ່ຮ່ວມມືເພື່ອຮັບມືກັບສິ່ງທ້າທາຍຕ່າງໆ ລວມທັງການຮັບມືກັບພະຍາດໂຄວິດ-19 ແລະ ຄັດຄ້ານການຫັນເອົາບັນຫາການຊອກຄົ້ນແຫຼ່ງກຳເນີດຂອງພະຍາດດັ່ງກ່າວມາເປັນບັນຫາການເມືອງ. ບັນດາຜູ້

ແທນກອງປະຊຸມ ໄດ້ເປັນເອກະພາບກັນຮັບຮອງເອົາຖະແຫຼງການຮ່ວມ ກ່ຽວກັບ ບັນດາຂໍ້ສະເໜີຂອງກອງປະຊຸມ ດັ່ງກ່າວ.

**3. ກອງປະຊຸມທາງໄກ ສະຫຼຸບຕີລາຄາການຮ່ວມມື, ແລກປ່ຽນທິດສະດີ ແລະ ບຳລຸງສ້າງພະນັກງານ ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຫວຽດນາມ ໄລຍະ 2016 – 2021 ແລະ ປຶກສາຫາລືທິດທາງການຮ່ວມມື ໄລຍະ 2021 – 2026**




ໃນວັນທີ 17 ກັນຍາ 2021, ສະພາທິດສະດີສູນກາງພັກປະຊາຊົນ ປະຕິວັດລາວ, ຄະນະພົວພັນຕ່າງປະເທດສູນກາງພັກ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດຂອງລາວ ໄດ້ຮ່ວມກັບ ສະພາທິດສະດີສູນກາງພັກກອມມູນິດຫວຽດນາມ, ຄະນະພົວພັນຕ່າງປະເທດສູນກາງພັກ, ສະຖາບັນການເມືອງແຫ່ງຊາດໂຮ່ຈິມິນ ຂອງຫວຽດນາມ ຈັດກອງປະຊຸມທາງໄກ ເພື່ອສະຫຼຸບຕີລາຄາການຮ່ວມມື, ແລກປ່ຽນທິດສະດີ ແລະ ບຳລຸງສ້າງພະນັກງານ ລະຫວ່າງ ພັກປະຊາຊົນ ປະຕິວັດລາວ ແລະ ພັກກອມມູນິດຫວຽດນາມ ໄລຍະ 2016-2021 ແລະ ປຶກສາຫາລືທິດທາງການຮ່ວມມື ໄລຍະ 2021-2026, ໂດຍການເປັນປະທານຮ່ວມຂອງ ສະຫາຍ ປອ ຄຳພັນ ເຜີຍຍະວົງ, ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກປະຊາຊົນປະຕິວັດລາວ ແລະ ສະຫາຍ ຫງວຽນ ຊວັນ ຖັງ, ກຳມະການກົມການເມືອງສູນກາງພັກ, ອຳນວຍການສະຖາບັນການເມືອງແຫ່ງຊາດໂຮ່ຈິມິນ, ປະທານສະພາທິດສະດີສູນກາງພັກກອມມູນິດຫວຽດນາມ ເຊິ່ງເຂົ້າຮ່ວມກອງປະຊຸມຄັ້ງນີ້ຍັງມີ ບັນດາສະຫາຍ ກຳມະການສູນກາງພັກ, ຕາງໜ້າຈາກ ບັນດາຄະນະສູນກາງພັກ, ສະພາທິດສະດີສູນກາງພັກ, ສະຖາບັນ, ກະຊວງ, ອົງການກ່ຽວຂ້ອງຂອງສອງຝ່າຍ ລາວ-ຫວຽດນາມ ຈຳນວນໜຶ່ງເຂົ້າຮ່ວມ. ປະທານກອງປະຊຸມທັງສອງຝ່າຍ ໄດ້ຜັດປ່ຽນກັນ ສະຫຼຸບຕີລາຄາການຮ່ວມມືແລກປ່ຽນທິດສະດີ, ການຄົ້ນຄວ້າວິທະຍາສາດ ແລະ ໃຫ້ຄຳປຶກສາດ້ານນະໂຍບາຍແກ່ສູນກາງພັກ; ການບຳລຸງສ້າງພະນັກງານຂັ້ນນຳພາ-ຄຸ້ມຄອງ ລະຫວ່າງ ສອງພັກ; ການສະຫຼຸບໂຄງການແປບົດນິພົນ ໂຮຈິມິນ ຄົບຊຸດ ຈາກພາສາຫວຽດ ເປັນ ພາລາລາວ ໄລຍະ 2016-2021 ແລະ ໂຄງການຮ່ວມມືດັ່ງກ່າວນີ້ມີເນື້ອໃນການແປ ແລະ ຮຽບຮຽງປຶ້ມນິພົນ ໂຮ່ຈິມິນ ຄົບຊຸດ ຈຳນວນ 15 ເຫຼັ້ມ ແລະ ວັດຈະນານຸກົມ ໂຮ່ຈິມິນວິທະຍາ 1 ເຫຼັ້ມ ດ້ວຍທຶນຊ່ວຍເຫຼືອຂອງຫວຽດນາມ ແລະ ທຶນປະກອບສ່ວນຂອງຝ່າຍລາວ ເຊິ່ງສອງຝ່າຍໄດ້ຈັດພິທີເປີດໂຄງການດັ່ງກ່າວຢ່າງເປັນທາງການໃນວັນທີ 10 ພຶດສະພາ 2016 ຜ່ານມາ. ບົນພື້ນຖານບົດບັນທຶກການຮ່ວມມື ລະຫວ່າງ ສອງສະພາທິດສະດີສູນກາງພັກ ລາວ-ຫວຽດນາມ, ສອງຝ່າຍໄດ້ມີການຮ່ວມມື, ເຄື່ອນໄຫວອວຽກ

ງານຄົ້ນຄວ້າທິດສະດີ ແລະ ແລກປ່ຽນບົດຮຽນຕ່າງໆ ຢ່າງມີວິທະຍາສາດ, ເປັນຕົ້ນແມ່ນການຈັດກອງປະຊຸມສຳມະນາທິດສະດີ ລະຫວ່າງ ສອງພັກ ລາວ-ຫວຽດນາມ, ການແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ການແລກປ່ຽນຂໍ້ມູນຂ່າວສານທາງດ້ານທິດສະດີ; ມາເຖິງປັດຈຸບັນ ສອງຝ່າຍໄດ້ຜັດປ່ຽນກັນເປັນເຈົ້າພາບຈັດກອງປະຊຸມສຳມະນາທິດສະດີສອງພັກ ລາວ-ຫວຽດນາມ ຈຳນວນ 7 ຄັ້ງ, ມີການແລກປ່ຽນຂໍ້ມູນຂ່າວສານດ້ານທິດສະດີ ໂດຍມີການສົ່ງບົດຂ່າວ "ທິດສະດີ ແລະ ພຶດຕິກຳ" , ໝາກຜົນການຄົ້ນຄວ້າ, ບົດຂຽນທີ່ພົວພັນເຖິງທິດສະດີການເມືອງນຳກັນ. ໃນໂອກາດດັ່ງກ່າວ, ສະພາທິດສະດີສູນກາງພັກກອມມູນິດຫວຽດນາມ ໄດ້ສົ່ງປຶ້ມໝາກຜົນຂອງ ກອງປະຊຸມສຳມະນາທິດສະດີຄັ້ງທີ 3 ລະຫວ່າງສອງພັກ ພາຍໃຕ້ຫົວຂໍ້ "ການພັດທະນາເສດຖະກິດຕະຫຼາດຕາມທິດສັງຄົມນິຍົມຢູ່ ຫວຽດນາມ ແລະ ລາວ ໃຫ້ສະພາທິດສະດີສູນກາງພັກ ປະຊາຊົນ ປະຕິວັດລາວ ລວມທັງໝົດ 920 ເຫຼັ້ມ (ພາສາລາວ ແລະ ພາສາຫວຽດນາມ). ນອກນັ້ນ, ຝ່າຍຫວຽດນາມ ຍັງໄດ້ໃຫ້ການຊ່ວຍເຫຼືອບຳລຸງ ແລະ ກໍ່ສ້າງພະນັກງານຂັ້ນຕ່າງໆໃຫ້ແກ່ພັກປະຊາຊົນ ປະຕິວັດລາວ, ພະນັກງານຂັ້ນນຳພາ-ຄຸ້ມຄອງຂອງພັກ, ລັດ ລາວ ໄປບຳລຸງສ້າງຢູ່ ສສ ຫວຽດນາມ, ເຊິ່ງເຫັນວ່າການບຳລຸງສ້າງດັ່ງກ່າວໄດ້ຮັບປະສິດທິຜົນເປັນຢ່າງດີ.

## III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ

### 1. ຫົວໜ້າຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ເອກອັກຄະລັດຖະທູດ ສສ ຫວຽດນາມ ປະຈຳ ສປປ ລາວ



ໃນວັນທີ 13 ກັນຍາ 2021, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ສະຫາຍ ຫງວຽນບ່າຮຸ່ງ, ເອກອັກຄະລັດຖະທູດແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ, ເຊິ່ງສະຫາຍທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງ ຕໍ່ການຢ້ຽມຂໍ່ານັບຄັ້ງນີ້. ສະຫາຍ ຫງວຽນບ່າຮຸ່ງ ໄດ້ແຈ້ງໃຫ້ຊາບກ່ຽວກັບການລະບາດຮອບໃໝ່ເປັນວົງກວ້າງ ຂອງພະຍາດໂຄວິດ-19 ໃນຫວຽດນາມ, ແຕ່ແນວໃດກໍຕາມ ພັກ-ລັດ ສສ ຫວຽດນາມ ໄດ້ວາງມາດຕະການເຂັ້ມງວດ ເພື່ອຫຼຸດຜ່ອນການແຜ່ຂະຫຍາຍຂອງເຊື້ອພະຍາດດັ່ງກ່າວ ໂດຍສະເພາະແມ່ນມາດຕະການ Lockdown. ສະຫາຍ ທອງສະຫວັນ ພົມວິຫານ ກໍໄດ້ແຈ້ງໃຫ້ຊາບກ່ຽວກັບສະພາບການລະບາດຂອງພະຍາດໂຄວິດ

ຢູ່ລາວ ແລະບັນດາມາດຕະການຕ່າງໆ ທີ່ລັດຖະບານ ສປປ ລາວ ວາງອອກ ກໍຄືສະພາບດ້ານເສດຖະກິດຂອງລາວ ໃນທ່າມກາງການລະບາດດັ່ງກ່າວ.

## 2. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ເອກອັກຄະລັດຖະທູດ ສ. ອິນເດຍ ປະຈໍາ ສປປ ລາວ



ໃນວັນທີ 7 ກັນຍາ 2021, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ Dinkar Asthana, ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມ ແຫ່ງ ສາທາລະນະລັດ ອິນເດຍ ປະຈໍາ ສປປ ລາວ. ເຊິ່ງ ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີ, ຊົມເຊີຍ ແລະ ຕີລາຄາສູງ ທີ່ທ່ານທູດໄດ້ມີການເຄື່ອນໄຫວ ໃນການປະຕິບັດໜ້າທີ່ການທູດຂອງຕົນຢ່າງຫ້າວຫັນ, ເຊິ່ງໄດ້ປະກອບສ່ວນເຂົ້າໃນການເສີມສ້າງສາຍພົວພັນມິດຕະ ພາບ ທີ່ເປັນມູນເຊື້ອ ລະຫວ່າງ ສອງປະເທດ ລາວ-ອິນເດຍ ຕະຫຼອດກວ່າ 6 ທົດສະຫວັດຜ່ານມາ; ຕີລາຄາສູງຕໍ່ບັນດາຜົນສໍາເລັດຫຼາຍດ້ານ ທີ່ລັດຖະບານ ແລະ ປະຊາຊົນອິນເດຍ ຍາດມາໄດ້ໃນການພັດທະນາປະເທດ ໃນຕະຫຼອດໄລຍະຜ່ານມາ ກໍຄື ປັດຈຸບັນ, ໂດຍສະເພາະການຮັບມືກັບການແຜ່ລະບາດຂອງພະຍາດໂຄວິດ-19, ເຊິ່ງລັດຖະບານອິນເດຍ ໄດ້ດໍາເນີນມາດຕະການຕ່າງໆຢ່າງມີປະສິດທິຜົນ ແລະ ໄດ້ຮັບຜົນສໍາເລັດເປັນກ້າວໆມາ ແລະ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ ລັດຖະບານ ແລະ ປະຊາຊົນອິນເດຍ ເປັນຕົ້ນແມ່ນການເຄື່ອນໄຫວຂອງ ທ່ານທູດ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອແກ່ ສປປ ລາວ ໃນການຈັດຕັ້ງປະຕິບັດໂຄງການຮ່ວມມືສອງຝ່າຍ ທາງດ້ານສາທາລະນະສຸກ, ການສຶກສາ, ການຄ້າ-ການລົງທຶນ, ວັດທະນະທໍາ ແລະ ອື່ນໆ, ເຊິ່ງເປັນການປະກອບສ່ວນອັນສໍາຄັນເຂົ້າໃນການພັດທະນາພື້ນຖານໂຄງລ່າງ, ເສດຖະກິດ-ສັງຄົມຂອງ ສປປ ລາວ ໃນປັດຈຸບັນ.

### 3. ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ ອວຍພອນ ວັນຊາດຫວຽດນາມ ຄົບຮອບ 76 ປີ



ໃນວັນທີ 01 ກັນຍາ 2021, ສະຫາຍ ສົມພອນ ສີຈະເລີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າອວຍພອນ ສະຫາຍ ຫງວຽນບ່າຮຸ່ງ, ເອກອັກຄະລັດຖະທູດ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ເນື່ອງໃນໂອກາດ ວັນສະຖາປະນາ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ຄົບຮອບ 76 ປີ (2/9/1945-2/9/2021). ໃນໂອກາດດັ່ງກ່າວ, ສະຫາຍ ສົມພອນ ສີຈະເລີນ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສຳເລັດ ແລະ ຜົນງານໃຫຍ່ຫຼວງ ຮອບດ້ານຂອງປະຊາຊົນຫວຽດນາມ ຍາດມາໄດ້ຕະຫຼອດໄລຍະ 76 ປີຜ່ານມາ ພາຍໃຕ້ການນຳພາອັນຖືກຕ້ອງສະຫຼາດສ່ອງໃສ ຂອງພັກກອມມູນິດຫວຽດນາມ ອັນໄດ້ເຮັດໃຫ້ ສສ ຫວຽດນາມ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ; ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງ, ການພົວພັນສາກົນໄດ້ຮັບການເປີດກວ້າງ ເຮັດໃຫ້ບົດບາດ, ອິດທິພົນຂອງຫວຽດນາມນັບມື້ນັບສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ; ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງພັກ, ສອງລັດ ແລະ ປະຊົນສອງຊາດ ລາວ-ຫວຽດນາມ ທີ່ນັບມື້ນັບມີຄວາມເລິກເຊິ່ງ, ມີປະສິດທິຜົນນຳເອົາຜົນປະໂຫຍດຕົວຈິງ ມາໃຫ້ປະຊາຊົນ ສອງຊາດ ລາວ-ຫວຽດນາມ. ສະຫາຍ ສົມພອນ ສີຈະເລີນ ຍັງໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຕໍ່ພັກ, ລັດ ແລະ ປະຊາຊົນ ຫວຽດນາມ ອ້າຍນ້ອງ ທີ່ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອຢ່າງໃຫຍ່ຫຼວງໃຫ້ແກ່ປະຊາຊົນລາວ ຕະຫຼອດໄລຍະຜ່ານມາ ທັງໃນໄລຍະຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍຄືໄລຍະປົກປັກຮັກສາ ແລະ ສ້າງສາປະເທດຊາດໃນປັດຈຸບັນ; ອວຍພອນສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ - ຫວຽດນາມ ຈົ່ງໝັ້ນຄົງຂະໜົງແກ່ນຕະຫຼອດກາລະນານ.